ກະຊວງກະສິກຳ ແລະ ປ່າໄມ້

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ 3)

# ປື້ມຄູ່ມື

# ວິທີວາງແຜນພັດທະນາຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ



ກັນຍາ 2016

# ຄຳນຳ

ປື້ມຄູ່ມືການວາງແຜນພັດທະນາຂັ້ນບ້ານ ແລະ ຂັ້ນກຸ່ມບ້ານຂອງ ທລຍ ຫົວນີ້ ໄດ້ຜັນຂະຫຍາຍມາຈາກ ປື້ມການວາງແຜນແບບມີສ່ວນຮ່ວມຂັ້ນບ້ານ ຂອງກະຊວງແຜນການ ແລະ ການລົງທຶນ ທີ່ໄດ້ຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການໃນທ້າຍປີ 2012. ພຽງແຕ່ວ່າ ປື້ມຄູ່ມືຫົວນີ້ ໄດ້ອະທິບາຍກ່ຽວກັບເຕັກນິກ ແລະ ວິທີການ ທີ່ມີລັກສະນະເລິກເຊິ່ງກວ່າເທົ່ານັ້ນ.

ດັ່ງທີ່ພວກເຮົາໄດ້ຮັບຮູ້ນຳກັນແລ້ວວ່າ ການວາງແຜນແບບມີສວ່ນຮ່ວມຂັ້ນບ້ານ ເປັນບາດກ້າວທີ່ສຳຄັນທີ່ສຸດ ເພາະແມ່ນການໃຫ້ສິດຢ່າງແທ້ຈິງ ແກ່ພໍ່ແມ່ປະຊາຊົນໝົດທຸກຄົນພາຍໃນບ້ານ ໂດຍສະເພາະແມ່ຍິງ, ຊົນເຜົ່າ ແລະ ຜູ້ທຸກຍາກ ໃນການສະແດງອອກເຖິງຄວາມມຸ່ງໝາດປາດຖະໜາຂອງເຂົາເຈົ້າ ເພື່ອໃຫ້ມີອະນາຄົດທີ່ດີຂຶ້ນ.

ຜົນທີ່ຈະໄດ້ຮັບຈາກການວາງແຜນພັດທະນາຂັ້ນບ້ານ ແມ່ນຜ່ານຂັ້ນຕອນການສ້າງແຜນວາດສັງຄົມ ແລະ ຊັບພະຍາກອນຂອງບ້ານແບບມີສ່ວນຮ່ວມ ເຂົາເຈົ້າຈະມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ຈຳແນກໄດ້ວ່າ ອັນໃດທີ່ເຂົາເຈົ້າມີຄວາມສຸກທີ່ສຸດ ແລະ ອັນໃດທີ່ເຂົາເຈົ້າຍັງມີຄວາມທຸກກວ່າໝູ່ ຢູ່ໃນບ້ານຂອງເຂົາເຈົ້າ, ຈາກນັ້ນຊຸມຊົນ ຈະສາມາດກຳນົດບຸລິມະສິດຄວາມຕ້ອງການ ທີ່ຄາດຫວັງວ່າຈະຊ່ວຍປັບປຸງຊີວິດການເປັນຢູ່ໃນຄົວເຮືອນຂອງເຂົາເຈົ້າໃຫ້ດີຂື້ນ (ເຂົາເຈົ້າຈະບໍ່ພຽງແຕ່ ຈະກຳນົດຄວາມຕ້ອງການດ້ານພື້ນຖານໂຄງລ່າງເທົ່ານັ້ນ, ແຕ່ເຂົາເຈົ້າຍັງກຳນົດບຸລິມະສິດຄວາມຕ້ອງການທາງດ້ານປັບປຸງຊີວິດການເປັນຢູ່ ແລະ ກິດຈະກຳຝຶກອົບຮົມສ້າງຄວາມເຂັ້ມແຂງໄປພ້ອມໆກັນ). ນອກຈາກນັ້ນ ຊຸມຊົນຈະມີຄວາມເຂົ້າໃຈຢ່າງຈະແຈ້ງ ວ່າອັນໃດທີ່ເຂົາເຈົ້າສາມາດເຮັດເອງໄດ້, ອັນໃດທີ່ເກີນກ່ວາຄວາມສາມາດຂອງເຂົາເຈົ້າ ຈຶ່ງສະເໜີພາກສ່ວນພາຍນອກໃຫ້ການສະໜັບສະໜູນຊ່ວຍເຫລືອ. ອັນນີ້ມັນໄດ້ສ້າງຄວາມເປັນເຈົ້າໃຫ້ແກ່ຊຸມຊົນ ບົນພື້ນຖານການຜັນຂະຫຍາຍທິດທາງນະໂຍບາຍ ໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງລັດຖະບານ ໂດຍສະເພາະທິດສາມສ້າງ.

ເນື່ອງຈາກວ່າປື້ມຄູ່ມືຫົວນີ້ ໄດ້ເປັນການທອ້ນໂຮມເອົາປະສົບການຕົວຈິງ ຈາກກອງທຶນຫລຸດຜ່ອນຄວາມທຸກຍາກ ທີ່ໄດ້ຈັດຕັ້ງປະຕິບັດຢູ່ບາງທ້ອງຖິ່ນເທົ່ານັ້ນ, ຈຶ່ງຫລີກລ້ຽງບໍ່ໄດ້ ສຳລັບຂໍ້ຂາດຕົກບົກພ່ອງບາງປະການ, ສະນັ້ນ ຈຶ່ງຖືໂອກາດນີ້ ຮຽກຮ້ອງມາຍັງທ່ານຜູ້ທີ່ໄດ້ນຳໃຊ້ປື້ມຄູ່ມືຫົວນີ້ ແລະ ບັນດາທ່ານຜູ້ອ່ານທັງຫລາຍ ຈົ່ງໄດ້ຊ່ວຍປະກອບສ່ວນຄຳຄິດຄຳເຫັນ ເພື່ອປັບປຸງປື້ມຄູ່ມືຫົວນີ້ໃຫ້ມີຄຸນນະພາບ ໂດຍສະເພາະ ເຮັດໃຫ້ແຜນພັດທະນາຂັ້ນບ້ານ ທີ່ຈະສ້າງຂື້ນມາ ກາຍເປັນທີ່ຍອມຮັບ ແລະ ສາມາດນຳໃຊ້ໄດ້ກັບທຸກພາກສ່ວນ.

**ຜູ້ອຳນວຍການບໍລິຫານ ທລຍ**

ບຸນກວ້າງ ສຸວັນນະພັນ
Bounkhouang SOUVANNAPHANH

**ສາລະບານ**

1. ກອງປະຊຸມວາງແຜນພັດທະນາຂັ້ນບ້ານ: ....4
1.1 ພາກສະເໜີນຳທົ່ວໄປ. ....4
1.2 ຈະໃຊ້ເວລາດົນປານໃດ ສຳລັບການຈັດກອງປະຊຸມດັ່ງກ່າວນີ້? ....4
1.3 ກອງປະຊຸມຈະຈັດຂຶ້ນຢູ່ໃສ?, ໃຜແດ່ຈະເຂົ້າຮ່ວມ? ກິດຈະກຳ ທີ່ຈະດຳເນີນ ໃນແຕ່ລະມື້ ມີຫຍັງແດ່? ....4
1.4 ກອງປະຊຸມ ມື້ທີ່ 1: ທົບທວນຄືນລະດັບຄວາມທຸກຍາກຂອງຄົວເຮືອນ, ວິເຄາະສະຖານະພາບ ແລະ ຈັດລຽງບຸລິມະສິດຄວາມຕ້ອງການຂອງກຸ່ມຍິງ ແລະ ກຸ່ມຊາຍ ....7
1.4.1 ບາດກ້າວທີ່ 1: ລົງທະບຽນຜູ້ເຂົ້າຮ່ວມ: ....7
1.4.2 ບາດກ້າວທີ່ 2: ພິທີເປີດກອງປະຊຸມ ....7
1.4.3 ບາດກ້າວທີ່ 3: ການທົບທວນຄືນລະດັບຄວາມທຸກຍາກຂອງຄົວເຮືອນຢູ່ພາຍໃນບ້ານ: ....7
1.4.4 ບາດກ້າວທີ່ 4: ແຕ້ມແຜນວາດສັງຄົມ ແລະ ຊັບພະຍາກອນຂອງຄຸ້ມ/ບ້ານ ....11
1.4.5 ບາດກ້າວທີ່ 5: ວິເຄາະສະຖານະພາບ ແລະ ຈັດລຽງບຸລິມະສິດຂອງກຸ່ມ (ກຸ່ມຍິງ/ກຸ່ມຊາຍ). ....13
• ຈັດລຽງບຸລິມະສິດຄວາມຕ້ອງການຂອງກຸ່ມຍ່ອຍ (ກຸ່ມຍິງ-ກຸ່ມຊາຍ). ....16
1.5 ກອງປະຊຸມ ມື້ທີ່ 2: ຄັດເລືອກບຸລິມະສິດຄວາມຕ້ອງການຂອງຄຸ້ມ ຫຼື ບ້ານ ....17
1.5.1 ບາດກ້າວທີ່ 1: ລົງທະບຽນຜູ້ເຂົ້າຮ່ວມ: ....17
1.5.2 ບາດກ້າວທີ່ 2: ນຳສະເໜີຈຸດປະສົງ ແລະ ຄາດໝາຍທີ່ຈະໄດ້ຮັບ ຈາກກອງປະຊຸມມື້ນີ້: ....18
1.5.3 ບາດກ້າວທີ່ 3: ຈັດລຽງບຸລິມະສິດຄວາມຕ້ອງການຂອງຄຸ້ມ/ບ້ານ. ....18
1.5.4 ບາດກ້າວທີ່ 4: ຄັດເລືອກເອົາຕົວແທນຂອງຄຸ້ມ/ຕົວແທນບ້ານ. ....19
1.6 ກອງປະຊຸມ ມື້ທີ່ 3: ສ້າງແຜນພັດທະນາບ້ານ _ ສະເພາະບ້ານໃດ ທີ່ມີຫລາຍກວ່າ 1 ຄຸ້ມ ....20
ອົງປະກອບ ແລະ ແບບຟອມຕ່າງໆທີ່ນຳໃຊ້ຢູ່ກອງປະຊຸມວາງແຜນພັດທະນາບ້ານ ....27
ແບບຟອມຕ່າງໆທີ່ນຳໃຊ້ຢູ່ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ....53
2. ກອງປະຊຸມວາງແຜນພັດທະນາຂັ້ນກຸ່ມບ້ານ: (ຂໍ້ແນະນຳການຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານ ໃນໄລຍະ 5 ປີ) ....45
2.1 ຈຸດປະສົງ ....45
2.2 ຄາດໝາຍຜົນໄດ້ຮັບຄື: ....45

2.3 ຜູ້ດຳເນີນກອງປະຊຸມ.....45
2.4 ຜູ້ເຂົ້າຮ່ວມກອງປະຊຸມ.....45
2.5 ສະຖານທີ່ຈັດກອງປະຊຸມ.....45
2.6 ກຳນົດເວລາ: 2 ມື້.....45
2.7 ເນື້ອໃນ ແລະ ຂັ້ນຕອນ ໃນການດຳເນີນກອງປະຊຸມ:.....46
2.8 ເຄື່ອງມືອຸປະກອນຮັບໃຊ້ກອງປະຊຸມ:.....51
2.8.1 ແບບຟອມ:.....51
2.8.2 ອຸປະກອນ:.....51
2.8.3 ເອກະສານ ນຳໃຊ້ເພື່ອເປັນບ່ອນອີງ:.....51
2.9 ໜ້າວຽກທີ່ຈະໄດ້ເຮັດ ກ່ອນຈັດກອງປະຊຸມ:.....51
2.10 ໜ້າວຽກທີ່ຈະໄດ້ເຮັດ ຫລັງຈາກກອງປະຊຸມ:.....52

# 1. ກອງປະຊຸມວາງແຜນພັດທະນາຂັ້ນບ້ານ:

## 1.1 ພາກສະເໜີນຳທົ່ວໄປ.

ດັ່ງທີ່ພວກເຮົາໄດ້ຮັບຮູ້ນຳກັນແລ້ວວ່າ ການວາງແຜນແບບມີສ່ວນຮ່ວມຂັ້ນບ້ານ ເປັນບາດກ້າວທີ່ສຳຄັນທີ່ສຸດໃນການພັດທະນາ ແລະ ແມ່ນການໃຫ້ສິດຢ່າງແທ້ຈິງ ແກ່ພໍ່ແມ່ປະຊາຊົນໝົດທຸກຄົນພາຍໃນບ້ານ ໂດຍສະເພາະແມ່ຍິງ, ຊົນເຜົ່າ ແລະ ຜູ້ທຸກຍາກ ໃນການສະແດງອອກເຖິງຄວາມມຸ່ງໝາດປາດຖະໜາຂອງເຂົາເຈົ້າ ເພື່ອໃຫ້ມີອະນາຄົດທີ່ດີຂຶ້ນ.

**(ຖ້າບ້ານໃດ ມີແຜນທີ່ຈະຍົກຍ້າຍ ໄປຢູ່ບ່ອນອື່ນ ໃນໄລຍະອັນໃກ້ນີ້ ແຜນພັດທະນາຂັ້ນບ້ານ ທີ່ຈະສ້າງຂຶ້ນມານີ້ ອາດຈະບໍ່ມີຄວາມເໝາະສົມ. ສະນັ້ນ, ຄວນສ້າງແຜນຢູ່ບ້ານທີ່ມີທີ່ຕັ້ງຖາວອນ)**

## 1.2 ຈະໃຊ້ເວລາດົນປານໃດ ສຳລັບການຈັດກອງປະຊຸມດັ່ງກ່າວນີ້?

- ກອງປະຊຸມດັ່ງກ່າວນີ້ ຈະໄດ້ດຳເນີນເປັນເວລາ 2 ວັນ ສຳລັບບ້ານທີ່ເປັນບ້ານດ່ຽວ ຫຼື ມີຄຸ້ມດຽວ;
- ກອງປະຊຸມດັ່ງກ່າວນີ້ ຈະໄດ້ດຳເນີນເປັນເວລາ 3 ວັນ ສຳລັບບ້ານມີ 2 ຄຸ້ມຂຶ້ນໄປ;
- ກອງປະຊຸມວາງແຜນພັດທະນາຂັ້ນບ້ານ ຈະຈັດຂຶ້ນຫລັງຈາກກອງປະຊຸມແນະນຳໂຄງການ ແລະ ສ້າງຄວາມເຂົ້າໃຈກ່ຽວກັບການວາງແຜນຂັ້ນບ້ານ ສຳເລັດແລ້ວ 1 ອາທິດ.

## 1.3 ກອງປະຊຸມຈະຈັດຂຶ້ນຢູ່ໃສ?, ໃຜແດ່ຈະເຂົ້າຮ່ວມ? ກິດຈະກຳ ທີ່ຈະດຳເນີນ ໃນແຕ່ລະມື້ ມີຫຍັງແດ່?

### 1.3.1 ໃນກໍລະນີ ບ້ານທີ່ເປັນບ້ານດ່ຽວ ຫຼື ມີຄຸ້ມດຽວເທົ່ານັ້ນ.

ທີມງານຜູ້ອຳນວຍຄວາມສະດວກ ໃນການວາງແຜນ ຕ້ອງໄດ້ໄປນອນຢູ່ບ້ານດັ່ງກ່າວນັ້ນ ກ່ອນມື້ຈັດກອງປະຊຸມ. ໂດຍຕອນກາງຄືນ ທີມງານຜູ້ອຳນວຍຄວາມສະດວກ ໃນການວາງແຜນ ຕ້ອງໄດ້ປະຊຸມ ນຳອຳນາດການປົກຄອງບ້ານ ເພື່ອແຈ້ງຈຸດປະສົງ ແລະ ປຶກສາຫາລື ກ່ຽວກັບການກະກຽມຄວາມພ້ອມ ໃນການດຳເນີນກອງປະຊຸມວາງແຜນພັດທະນາບ້ານ. ສິ່ງສຳຄັນກວ່າໝູ່ນັ້ນ ຄືຮັບປະກັນໃຫ້ແຕ່ລະຄົວເຮືອນ ໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ ເພື່ອພ້ອມກັນກຳນົດທິດທາງການພັດທະນາບ້ານຂອງຕົນເອງ ໃນໄລຍະ 5 ປີຕໍ່ໜ້າ. ລາຍລະອຽດ ໄດ້ອະທິບາຍຢູ່ຕາຕະລາງດຳເນີນກອງປະຊຸມ ຂ້າງລຸ່ມນີ້:

## ຕາຕະລາງດຳເນີນກອງປະຊຸມວາງແຜນພັດທະນາບ້ານ.

| | **ມື້ທີ** 1 | **ມື້ທີ** 2 |
|---|---|---|
| **ສະຖານທີ່:** | ສະໂມສອນບ້ານ, ໂຮງຮຽນ ຫຼື ບ່ອນອື່ນໆ ທີ່ມີຄວາມເໝາະສົມ | ສະໂມສອນບ້ານ, ໂຮງຮຽນ ຫຼື ບ່ອນອື່ນໆ ທີ່ມີຄວາມເໝາະສົມ |
| **ຜູ້ເຂົ້າຮ່ວມ:** | ຕາງໜ້າແຕ່ລະຄົວເຮືອນ 1 ຄົນ ຫຼື ຢ່າງໜ້ອຍ 80% ຂອງຄົວເຮືອນ ຕ້ອງໄດ້ເຂົ້າຮ່ວມ, ໃນນັ້ນຢ່າງໜ້ອຍ 50% ຕ້ອງແມ່ນຜູ້ຍິງ ແລະ ຢ່າງໜ້ອຍຄົວເຮືອນທຸກຍາກ ຕ້ອງເຂົ້າຮ່ວມ 60% . *ຖ້າບໍ່ດັ່ງນັ້ນ ສະເໜີເລື່ອນກອງປະຊຸມອອກໄປມື້ໃໝ່* | ຕາງໜ້າແຕ່ລະຄົວເຮືອນ 1 ຄົນ ຫຼື ຢ່າງໜ້ອຍ 80% ຂອງຄົວເຮືອນ ຕ້ອງໄດ້ເຂົ້າຮ່ວມ, ໃນນັ້ນຢ່າງໜ້ອຍ 50% ຕ້ອງແມ່ນຜູ້ຍິງ ແລະ ຢ່າງໜ້ອຍຄົວເຮືອນທຸກຍາກ ຕ້ອງເຂົ້າຮ່ວມ 60% . |
| **ກິດຈະກຳ:** | | |
| **ຕອນເຊົ້າ:** | **ປະຊຸມຮ່ວມກັນໝົດ:**<br>• ທົບທວນ ແລະ ກວດກາຄືນຂໍ້ມູນລະດັບຄວາມທຸກຍາກຂອງຄົວເຮືອນ ທີ່ມີຢູ່ແລ້ວ ເຊິ່ງໄດ້ແບ່ງເປັນ 2 ລະດັບຄື: ທຸກ ແລະ ບໍ່ທຸກ. | **ປະຊຸມຮ່ວມກັນໝົດ:**<br>ແຕ່ລະກຸ່ມນຳສະເໜີຜົນການຄົ້ນຄວ້າ ຄື:<br>• ນຳສະເໜີແຜນວາດຂອງບ້ານ ຈາກນັ້ນຄັດເລືອກ ແລະ ປັບປຸງແຜນວາດຂອງບ້ານຄືນ<br>• ນຳສະເໜີ ບຸລິມະສິດຄວາມຕ້ອງການຂອງກຸ່ມຂອງຕົນ |
| | **ແບ່ງເປັນ 2 ກຸ່ມ** (ຄົວເຮືອນທຸກ ແລະ ບໍ່ທຸກ):<br>• ໄຈ້ແຍກ ຫຼື ແບ່ງ ລະດັບຄວາມ ທຸກຍາກຂອງຄົວເຮືອນ ແຕ່ລະໆດັບ ອອກເປັນ 2 ລະດັບ ຕື່ມອີກ. | **ປະຊຸມຮ່ວມກັນໝົດ:**<br>• ຄັດເລືອກບຸລິມະສິດຄວາມຕ້ອງການຂອງບ້ານ |
| | **ຕອນບ່າຍ:** | |
| | **ແບ່ງກຸ່ມຍິງ ແລະ ກຸ່ມຊາຍ:**<br>• ແຕ້ມແຜນວາດສັງຄົມ ແລະ ຊັບພະຍາກອນຂອງບ້ານ<br>• ວິເຄາະສະຖານະພາບໃນປະຈຸບັນ ແລະ ກຳນົດຄວາມຕ້ອງການຂອງກຸ່ມ | • ທົບທວນຄືນໂຄງຮ່າງການຈັດຕັ້ງຂອງບ້ານ<br>• ຄັດເລືອກ ເອົາຕົວແທນບ້ານ 6 ຄົນ . ໃນນັ້ນເຄິ່ງນຶ່ງ ຕ້ອງແມ່ນຜູ້ຍິງ. ເພື່ອໄປຮ່ວມກອງປະຊຸມວາງແຜນພັດທະນາຢູ່ຂັ້ນກຸ່ມບ້ານ |
| | | • ຝຶກອົບຮົມ ຫຼື ແນະນຳ ຕົວແທນບ້ານກ່ຽວກັບວິທີການນຳສະເໜີ ແລະ ປ້ອງກັນເອົາແຜນພັດທະນາບ້ານຂອງຕົນ ຢູ່ກອງປະຊຸມວາງແຜນພັດທະນາຢູ່ຂັ້ນກຸ່ມບ້ານ |

## 1.3.2 ໃນກໍລະນີ ບ້ານມີ 2 ຄຸ້ມຂຶ້ນໄປ.

| | ມື້ທີ 1 | ມື້ທີ 2 | ມື້ທີ 3 |
|---|---|---|---|
| **ສະຖານທີ່:** | **ຈັດຂຶ້ນຢູ່ຄຸ້ມ_ຄຸ້ມໃດຄຸ້ມນັ້ນ**<br>(ຖ້າໄລຍະຫ່າງຂອງຄຸ້ມ ໃຊ້ເວລາຍ່າງບໍ່ເກີນ 30 ນາທີ ສະເໜີໃຫ້ຈັດຮ່ວມກັນ) | **ຈັດຂຶ້ນຢູ່ຄຸ້ມ_ຄຸ້ມໃດຄຸ້ມນັ້ນ** | **ຈັດຂຶ້ນຢູ່ຄຸ້ມໃດຄຸ້ມໜຶ່ງຂອງບ້ານ** |
| **ຜູ້ເຂົ້າຮ່ວມ:** | ຕາງໜ້າແຕ່ລະຄົວເຮືອນ 1 ຄົນ ຫຼື ຢ່າງໜ້ອຍ 80% ຂອງຄົວເຮືອນ ຕ້ອງໄດ້ເຂົ້າຮ່ວມ, ໃນນັ້ນຢ່າງໜ້ອຍ 50% ຕ້ອງແມ່ນຜູ້ຍິງ ແລະ ຢ່າງໜ້ອຍຄົວເຮືອນທຸກຍາກ ຕ້ອງເຂົ້າຮ່ວມ 60% . *ຖ້າບໍ່ດັ່ງນັ້ນ ສະເໜີເລື່ອນກອງປະຊຸມອອກໄປມື້ໃໝ່* | ຕາງໜ້າແຕ່ລະຄົວເຮືອນ 1 ຄົນ ຫຼື ຢ່າງໜ້ອຍ 80% ຂອງຄົວເຮືອນ ຕ້ອງໄດ້ເຂົ້າຮ່ວມ, ໃນນັ້ນຢ່າງໜ້ອຍ 50% ຕ້ອງແມ່ນຜູ້ຍິງ ແລະ ຢ່າງໜ້ອຍຄົວເຮືອນທຸກຍາກ ຕ້ອງເຂົ້າຮ່ວມ 60% . | ຜູ້ຕາງໜ້າແຕ່ລະໜ່ວຍທີ່ມີຢູ່ໃນຄຸ້ມ (ໜ່ວຍລະ 3 ຄົນ ໃນນັ້ນຢ່າງໜ້ອຍ ຕ້ອງແມ່ນຜູ້ຍິງ 2 ຄົນ) |
| **ກິດຈະກຳ:** | | | |
| **ຕອນເຊົ້າ:** | **ປະຊຸມຮ່ວມກັນໝົດ:**<br>• ທົບທວນ ແລະ ກວດກາຄືນຂໍ້ມູນລະດັບຄວາມທຸກຍາກຂອງຄົວເຮືອນ ທີ່ມີຢູ່ແລ້ວ ເຊິ່ງໄດ້ແບ່ງເປັນ 2 ລະດັບຄື: ທຸກ ແລະ ບໍ່ທຸກ. | ແຕ່ລະກຸ່ມນຳສະເໜີຜົນການຄົ້ນຄວ້າ ຄື:<br>• ນຳສະເໜີແຜນວາດຂອງບ້ານ ຈາກນັ້ນຄັດເລືອກ ແລະ ປັບປຸງແຜນວາດຂອງບ້ານຄືນ<br>• ນຳສະເໜີ ບຸລິມະສິດຄວາມຕ້ອງການຂອງກຸ່ມຂອງຕົນ | **ປະຊຸມຮ່ວມກັນຫລາຍຄຸ້ມ:**<br>ແຕ່ລະຄຸ້ມນຳສະເໜີແຜນພັດທະນາຄຸ້ມຂອງຕົນ:<br>• ແຜນວາດຂອງຄຸ້ມ ສະ ແດງໃຫ້ເຫັນສະຖານະພາບຂອງບ້ານ, ສິ່ງທີ່ມີ ແລະ ສິ່ງທີ່ຍັງຂາດເຂີນ, ຈຳນວນຄົວເຮືອນທຸກຍາກ<br>• ບຸລິມະສິດຄວາມຕ້ອງການຂອງຄຸ້ມ |
| | **ແບ່ງເປັນ 2 ກຸ່ມ** (ຄົວເຮືອນທຸກ ແລະ ບໍ່ທຸກ):<br>• ໄຈ້ແຍກ ຫຼື ແບ່ງ ລະດັບຄວາມທຸກຍາກຂອງຄົວເຮືອນ ແຕ່ລະໆດັບ ອອກເປັນ 2 ລະດັບ ຕື່ມອີກ. | **ປະຊຸມຮ່ວມກັນໝົດ:**<br>• ຄັດເລືອກບຸລິມະສິດຄວາມຕ້ອງການຂອງຄຸ້ມ | • ຈັດລະດັບຄວາມທຸກຍາກຂອງແຕ່ລະຄຸ້ມພາຍໃນບ້ານ<br>• ຄັດເລືອກເອົາບຸລິມະສິດຄວາມຕ້ອງການຂອງບ້ານ |
| **ຕອນບ່າຍ:** | **ແບ່ງກຸ່ມຍິງ ແລະ ກຸ່ມ:**<br>• ຊາຍແຕ້ມແຜນວາດສັງຄົມ ແລະ | • ຄັດເລືອກ ເອົາຕົວແທນຂອງຄຸ້ມ (ແຕ່ລະໜ່ວຍທີ່ມີຢູ່ໃນ | • ທົບທວນຄືນໂຄງຮ່າງການຈັດຕັ້ງຂອງບ້ານໃນປະຈຸບັນ |

| | | | |
|---|---|---|---|
| | ຊັບພະຍາກອນຂອງບ້ານ<br>• ວິເຄາະສະຖານະພາບໃນປະຈຸບັນ ແລະ ກຳນົດຄວາມຕ້ອງການຂອງກຸ່ມ | ຄຸ້ມ ໜ່ວຍລະ 3 ຄົນ,ຢ່າງໜ້ອຍ ຕ້ອງແມ່ນຜູ້ຍິງ 1 ຄົນ). ເພື່ອໄປຮ່ວມກອງປະຊຸມວາງແຜນພັດທະນາຢູ່ຂັ້ນບ້ານ | • ຄັດເລືອກ ເອົາຕົວແທນບ້ານ 6 ຄົນ . ໃນນັ້ນເຄິ່ງນຶ່ງຕ້ອງແມ່ນຜູ້ຍິງ. ເພື່ອໄປຮ່ວມກອງປະຊຸມວາງແຜນພັດທະນາຢູ່ຂັ້ນກຸ່ມບ້ານ |
| | | | • ຝຶກອົບຮົມ ຫຼື ແນະນຳໃຫ້ແກ່ຕົວແທນບ້ານ ກ່ຽວກັບການນຳສະເໜີ ແລະ ປ້ອງກັນເອົາແຜນພັດທະນາບ້ານຂອງຕົນ ຢູ່ກອງປະຊຸມວາງແຜນພັດທະນາຢູ່ຂັ້ນກຸ່ມບ້ານ |

## 1.4 <u>ກອງປະຊຸມ ມື້ທີ່</u> 1: ທົບທວນຄືນລະດັບຄວາມທຸກຍາກຂອງຄົວເຮືອນ, ວິເຄາະສະຖານະພາບ ແລະ ຈັດລຽງບຸລິມະສິດຄວາມຕ້ອງການຂອງກຸ່ມຍິງ ແລະ ກຸ່ມຊາຍ.

### 1.4.1 <u>ບາດກ້າວທີ່ 1</u>: ລົງທະບຽນຜູ້ເຂົ້າຮ່ວມ:

- ນັບຈຳນວນຄົນ ເພື່ອຮັບຮອງວ່າຈຳນວນຜູ້ເຂົ້າຮ່ວມ ໄດ້ຕາມຈຳນວນທີ່ກຳນົດໄວ້;
- ນຳໃຊ້ແບບຟອມລົງທະບຽນ ແລະ ກວດກາຄວາມຖືກຕ້ອງຂອງການລົງທະບຽນ.

***ໝາຍເຫດ***: *ເພື່ອບໍ່ໃຫ້ມີຄວາມສັບສົນ ຈຶ່ງບໍ່ຄວນເລາະລົງທະບຽນ ໃນເວລາທີ່ກຳລັງດຳເນີນກອງປະຊຸມຢູ່. ສະນັ້ນ, ສະເໜີລົງທະບຽນກ່ອນ ຫຼື ຫລັງ ດຳເນີນກອງປະຊຸມ ຈະເປັນການດີກວ່າ.*

### 1.4.2 <u>ບາດກ້າວທີ່ 2:</u> ພິທີເປີດກອງປະຊຸມ

- ຜູ້ອຳນວຍຄວາມສະດວກ ນຳສະເໜີຜູ້ເຂົ້າຮ່ວມ, ຈຸດປະສົງ ແລະ ຄາດໝາຍທີ່ຈະໄດ້ຮັບຈາກຂອງກອງປະຊຸມ.
- ນາຍບ້ານມີຄຳເຫັນ ແລະ ກ່າວເປີດກອງປະຊຸມ ຢ່າງເປັນທາງການ.

### 1.4.3 <u>ບາດກ້າວທີ່ 3</u>: ການທົບທວນຄືນລະດັບຄວາມທຸກຍາກຂອງຄົວເຮືອນຢູ່ພາຍໃນບ້ານ:

**<u>ຈຸດປະສົງ</u>**: ເພື່ອຈຳແນກໄດ້ວ່າ ໃຜແມ່ນຜູ້ທຸກຍາກກວ່າໝູ່ ຫຼື ໃຜແມ່ນກຸ່ມເປົ້າໝາຍທີ່ຕ້ອງການໄດ້ຮັບການຊ່ວຍເຫລືອກ່ອນໝູ່ ຫລື ໄດ້ຮັບການພັດທະນາກ່ອນໝູ່ ຢູ່ໃນບ້ານຂອງພວກເຮົາ.

**<u>ກຳນົດເວລາ:</u>** 2-3 ຊົ່ວໂມງ

**<u>ວິທີການ</u>**: ປະຊຸມຮ່ວມກັນ ແລະ ແຍກເປັນກຸ່ມ

**ຂັ້ນຕອນ:**

➢ **ສ້າງຄວາມເຂົ້າໃຈ:**

- ອະທິບາຍໂດຍຫຍໍ້ວ່າ: ເປັນຫຍັງຊຸມຊົນ ຈຶ່ງຕ້ອງໄດ້ຈັດລະດັບຄວາມທຸກຍາກຂອງຄົວເຮືອນ. ສະເໜີໃຫ້ເລົ່າເລື່ອງ ອາຈານສອນຍິງທະນູ ກັບນັກຮຽນ 5 ຄົນ (ຄວນແຕ້ມຮູບຕົ້ນໄມ້ ແລະ ນົກ) ຫຼື ນໍາໃຊ້ແຜ່ນພາບ ຢູ່ໃນຖົງເຄື່ອງມື ການພັດທະນາໂດຍຊຸມຊົນເປັນເຈົ້າການ ຫຼື CDD ເພື່ອຊ່ວຍໃນການອະທິບາຍ. ຕັ້ງຄໍາຖາມວ່າ: ແຕ່ລະຄົວເຮືອນຢູ່ບ້ານເຮົາ ແມ່ນບໍ່ຄືກັນແມ່ນບໍ?, ຈໍານວນຄົນຕ່າງກັນ, ຄວາມສາມາດ, ການຮັບຮູ້ ແລະ ການກະທໍາ ກໍມີຄວາມແຕກຕ່າງກັນ ແມ່ນບໍ?, ດ້ານສຸຂະພາບ, ດ້ານທີ່ຢູ່ອາໃສ, ດ້ານຊັບສົມບັດ ເຊັ່ນ: ທີ່ດິນ, ເຄື່ອງມືທໍາການຜະລິດ, ພາຫະນະຮັບໃຊ້ ກໍມີຄວາມແຕກຕ່າງກັນ ແລະ ມີຄວາມແຕກຕ່າງກັນດ້ານອື່ນໆອີກ ແມ່ນບໍ?, .....
- ເງື່ອນໄຂຄວາມທຸກຍາກຂອງຄົວເຮືອນ ຂອງແຕ່ລະບ້ານຈະບໍ່ຄືກັນ ທັງນີ້ຂຶ້ນກັບເຂົາເຈົ້າເປັນຜູ້ກໍານົດເອງ ໂດຍຊຸມຊົນຈະອີງໃສ່ຄວາມແຕກຕ່າງທາງດ້ານຊີວິດການເປັນຢູ່ ລະຫວ່າງຄົວເຮືອນນີ້ ແລະ ຄົວເຮືອນອື່ນໆ....
- ຢູ່ໃນຂໍ້ມູນຂອງຫ້ອງການພັດທະນາຊົນນະບົດເມືອງ ພວກເຮົາຈະເຫັນເປັນ ລັກສະນະດັ່ງລຸ່ມນີ້:



ຄົວເຮືອນ ທຸກ ... ຄົວເຮືອນ ບໍ່ທຸກ

ພວກເຮົາສາມາດ ໄຈ້ແຍກຈາກລະດັບຄົວເຮືອນ **ທຸກ** ໃຫ້ເຫັນຕື່ມວ່າມີຈັກຄົວເຮືອນແທ້ໆທີ່ທຸກທີ່ສຸດ ແລະ ໃນປະເພດຄົວເຮືອນ **ບໍ່ທຸກ** ພວກເຮົາກໍສາມາດໄຈ້ແຍກໃຫ້ເຫັນຕື່ມ ວ່າໃນປະເພດນີ້ມີຈັກຄົວເຮືອນທີ່ດີລື່ນໝູ່ແທ້ໆ.

ຈາກນັ້ນຄົວເຮືອນຢູ່ໃນບ້ານ ຈະຖືກແບ່ງເປັນ 4 ລະດັບ ຄືດັ່ງຮູບຂ້າງລຸ່ມນີ້:



**ທຸກທີ່ສຸດ** **ທຸກ** **ປານກາງ** **ບໍ່ທຸກ**

ສາມາດໃຊ້ສີຕ່າງໆ ເປັນສັນຍາລັກ ເຊັ່ນ: **ສີແດງ** ໝາຍເຖິງຄົວເຮືອນທີ່ທຸກທີ່ສຸດ, **ສີດໍາ** ໝາຍເຖິງຄົວເຮືອນທຸກ, **ສີຟ້າ** ໝາຍເຖິງຄົວເຮືອນປານກາງ ແລະ **ສີຂຽວ** ໝາຍເຖິງຄົວເຮືອນບໍ່ທຸກ.

- ໂດຍປົກກະຕິ ພາບລວມຂອງລະດັບຄວາມທຸກຍາກ ຢູ່ໃນຊຸມຊົນໜຶ່ງໆ ມີຮູບຮ່າງເໝືອນໃບໄມ້ ດັ່ງນີ້:

ລະດັບຄວາມທຸກຍາກ ຂອງແຕ່ລະບ້ານ
ຈະມີຮູບຮ່າງລັກສະນະຄືໃບໄມ້ ດັ່ງຕົວຢ່າງຂ້າງລຸ່ມນີ້:




- ກວດກາຄືນລາຍຊື່ຄົວເຮືອນ ທຸກ ແລະ ບໍ່ທຸກ (ຕາມຂໍ້ມູນຂອງຫ້ອງການພັດທະນາຊົນນະບົດເມືອງ). ແຕ່ລະປະເພດມີເທົ່າໃດ? ຈາກນັ້ນສະເໜີແບ່ງເປັນ 2 ກຸ່ມ.
- **ແບ່ງເປັນ 2 ກຸ່ມຄົ້ນຄວ້າ** (ຄົວເຮືອນປະເພດທຸກ ແລະ ຄົວເຮືອນປະເພດບໍ່ທຸກ)
- ຜູ້ເຂົ້າຮ່ວມ ນັ່ງເປັນວົງມົນ. ຈາກນັ້ນ ສະເໜີໃຫ້ແຕ່ລະຄົນ ສັງເກດເບິ່ງຄົວເຮືອນອື່ນໆ ຢູ່ໃນກຸ່ມຂອງຕົນ ໂດຍຕັ້ງຄຳຖາມວ່າ:
  - ສຳລັບກຸ່ມຄົວເຮືອນ <u>**ທຸກ**</u> ຕັ້ງຄຳຖາມວ່າ: ມີຈັກຄົວເຮືອນແທ້ໆ ທີ່ທຸກທີ່ສຸດກວ່າໝູ່ຢູ່ໃນກຸ່ມຂອງພວກເຮົາ? ຈາກນັ້ນ ຜູ້ອຳນວຍຄວາມສະດວກຂຽນລາຍຊື່ຄົວເຮືອນໃສ່ເຈ້ຍແຜ່ນໃຫ່ຍ. ເມື່ອຮູ້ວ່າຈຳນວນຄົວເຮືອນທີ່ທຸກທີ່ສຸດກວ່າໝູ່ມີເທົ່າໃດ, ສ່ວນຄົວເຮືອນທີ່ຍັງເຫລືອນັ້ນ ເອີ້ນວ່າ: ລະດັບຄົວເຮືອນ <u>**ທຸກ**</u> (ແຕ່ບໍ່ແມ່ນທຸກທີ່ສຸດ). ຈາກນັ້ນໃຫ້ຖາມຕື່ມວ່າ: ຍ້ອນຫຍັງຄົວເຮືອນ ທີ່ທຸກຍາກທີ່ສຸດຈຶ່ງແຕກຕ່າງ ກັບຄົວເຮືອນອື່ນໆ? ເມື່ອໄດ້ຄຳຕອບພວກເຮົາກໍຈະໄດ້ເງື່ອນໄຂຄວາມທຸກຍາກຂອງລະດັບຄົວເຮືອນດັ່ງກ່າວນີ້.
  - ສຳລັບກຸ່ມຄົວເຮືອນ <u>**ບໍ່ທຸກ**</u> ຕັ້ງຄຳຖາມວ່າ: ມີຈັກຄົວເຮືອນແທ້ໆ ທີ່ດີກວ່າໝູ່ຢູ່ໃນກຸ່ມຂອງພວກເຮົາ? ຈາກນັ້ນ ຜູ້ອຳນວຍຄວາມສະດວກຂຽນລາຍຊື່ຄົວເຮືອນໃສ່ເຈ້ຍແຜ່ນໃຫ່ຍ. ເມື່ອຮູ້ວ່າຈຳນວນຄົວເຮືອນທີ່ດີກວ່າໝູ່ມີເທົ່າໃດແລ້ວ ຫຼື ເອີ້ນວ່າຄົວເຮືອນ <u>**ບໍ່ທຸກ**</u>, ສ່ວນຄົວເຮືອນທີ່ຍັງເຫລືອນັ້ນ ເອີ້ນວ່າ: ລະດັບຄົວເຮືອນ <u>**ປານກາງ**</u> (ແຕ່ບໍ່ແມ່ນບໍ່ທຸກ). ຈາກນັ້ນໃຫ້ຖາມຕື່ມວ່າ: ຍ້ອນຫຍັງຄົວເຮືອນ ທີ່ບໍ່ທຸກ ຈຶ່ງແຕກຕ່າງ ກັບຄົວເຮືອນອື່ນໆທີ່ຍັງເຫລືອ? ເມື່ອໄດ້ຄຳຕອບພວກເຮົາກໍຈະ

ໄດ້ເງື່ອນໄຂຄວາມທຸກຍາກຂອງລະດັບຄົວເຮືອນດັ່ງກ່າວນີ້. ໝາຍຄວາມວ່າ ມາຮອດນີ້ ພວກເຮົາໄດ້ ໄດ້ຈຳນວນ ແລະ ເງື່ອນໄຂຄວາມທຸກຍາກ ດັ່ງແຜນວາດຂ້າງເທິງ.

- ຂຽນຫົວຂໍ້ ລະດັບຄົວເຮືອນທຸກ (ທຸກຍາກທີ່ສຸດ, ແລະ ທຸກ) ໃສ່ເຈ້ຍໃຫ່ຍແຜ່ນໜຶ່ງ ແລະ ຂຽນຫົວຂໍ້ ລະດັບຄົວເຮືອນບໍ່ທຸກ (ປານກາງ ແລະ ບໍ່ທຸກ) ໃສ່ເຈ້ຍໃຫ່ຍແຜ່ນໜຶ່ງ.

**ກຳນົດເງື່ອນໄຂຄວາມທຸກຍາກຂອງຄົວເຮືອນຢູ່ໃນບ້ານ**

| ຄົວເຮືອນທຸກ | | ຄົວເຮືອນບໍ່ທຸກ | |
|---|---|---|---|
| ທຸກທີ່ສຸດ 🔴 | ທຸກ ⚫ | ປານກາງ 🔵 | ບໍ່ທຸກ 🟢 |
| | | | |

- **ຈັດລະດັບຄວາມທຸກຍາກຄົວເຮືອນ**
  - ຕັດເຈ້ຍສີ ທີ່ໃຊ້ເປັນສັນຍາລັກ ຄົວເຮືອນແຕ່ລະໆດັບ ຂະໜາດປະມານ 5 ຊມ x 10 ຊມ ເພື່ອຂຽນຊື່ ຜົວ ແລະ ເມັຍ (ເພາະບາງຄົວເຮືອນ ອາດຈະມີຊື່ຄືກັນ)

*ໝາຍເຫດ: ຖ້າຫາກ ຄົວເຮືອນໃດ ບໍ່ເຫັນດີນຳວ່າຕົນນອນຢູ່ໃນລະດັບຄວາມທຸກຍາກ ຕາມເງື່ອນໄຂທີ່ໄດ້ກຳນົດຮ່ວມກັນ. ໃນກໍລະນີ ດັ່ງກ່າວນີ້ ອຳນາດການປົກຄອງບ້ານ ພ້ອມດ້ວຍອົງການຈັດຕັ້ງມະຫາຊົນຂອງບ້ານ ຕ້ອງໄດ້ມີຄຳເຫັນຕິລາຄາ ວ່າຄົວເຮືອນດັ່ງກ່າວຄວນຈັດຢູ່ໃນລະດັບຄວາມທຸກຍາກໃດ ຫຼື ອາດຈະລົງໄປສັງເກດເບິ່ງຕົວຈິງ ສະພາບເຮືອນຂອງຜູ້ກ່ຽວ ແລະ ອະທິບາຍ ພ້ອມທັງກຳນົດຮ່ວມກັນອີກເທື່ອນຶ່ງ ວ່າຄົວເຮືອນຜູ້ກ່ຽວນັ້ນ ນອນຢູ່ໃນຄວາມທຸກຍາກລະດັບໃດ?*

- ໃນກໍລະນີ ຄົວເຮືອນໃດບໍ່ມາ. ທີ່ປະຊຸມ ແລະ ອຳນາດການປົກຄອງບ້ານ ເຖົ້າແກ່ແນວໂຮມບ້ານ ເປັນຜູ້ກຳນົດໃຫ້ ຈາກນັ້ນຈຶ່ງນຳສະເໜີຕໍ່ຜູ້ກ່ຽວ ໃນກໍລະນີທີ່ເຂົາເຈົ້າບໍ່ເຫັນດີນຳ ກໍສາມາດປັ່ນແປງໄດ້.
- ຂໍ້ມູນດັ່ງກ່າວນີ້ ຈະໄດ້ນຳໃຊ້ ຢູ່ໃນໄລຍະການກຳນົດວິໄສທັດ ແລະ ສ້າງແຜນພັດທະນາບ້ານ.

- ຂໍ້ມູນດັ່ງກ່າວນີ້ຈະໃຊ້ເພື່ອປຽບທຽບໃນແຕ່ລະປີຕໍ່ໜ້າ ວ່າຄົວເຮືອນຂອງຕົນໄດ້ມີພັດທະນາຂື້ນ ຫຼື ຫລຸດລົງ.
- ຕາຕະລາງລາຍຊື່ ລະດັບຄົວເຮືອນທຸກຍາກ ຄວນຕິດສະແດງໄວ້ ຢູ່ຫ້ອງການບ້ານ ຫຼື ບ່ອນປະຊຸມຂອງບ້ານ. ນອກຈາກນີ້ແຕ່ລະຄົວເຮືອນຕ້ອງໄດ້ເຮັດ<u>**ບັດ**</u>**ອັດແຂງ** ເພື່ອເກັບຮັກສາໄວ້ ເພື່ອສືບທຽບໃນປີຕໍ່ໆໄປ;

### 1.4.4 <u>ບາດກ້າວທີ່ 4</u>: ແຕ້ມແຜນວາດສັງຄົມ ແລະ ຊັບພະຍາກອນຂອງຄຸ້ມ/ບ້ານ

- **ຈຸດປະສົງ**: ເພື່ອໃຫ້ຜູ້ເຂົ້າຮ່ວມ ມີຄວາມເຂົ້າໃຈ ກ່ຽວກັບ ສະຖານະພາບໃນປະຈຸບັນ ຢູ່ໃນບ້ານຂອງເຂົາເຈົ້າ ວ່າອັນໃດ ທີ່ເຂົາເຈົ້າມີແລ້ວ? ແລະ ອັນໃດທີ່ເຂົາເຈົ້າຂາດເຂີນ?.
- **ກຳນົດເວລາ**: ປະມານ 2 ຊົ່ວໂມງ
- **ວິທີການ**: ແຍກກຸ່ມຍິງ ແລະ ຊາຍ
- **ຂັ້ນຕອນ** :

- ກ່ອນອື່ນ ຕັດສິນໃຈວ່າ ທ່ານຈະແຕ້ມແຜນວາດຊັບພະຍາກອນຢູ່ບ່ອນໃດ. ເຊິ່ງທ່ານສາມາດແຕ້ມແຜນວາດ ຢູ່ໃນຫ້ອງຮຽນ (ໃຫ້ນຳໃຊ້ເຈັ້ຍແຜ່ນໃຫ່ຍ ແລະ ເຝີດຊຽນເຈັ້ງສີຕ່າງໆ) ຫລື ຖ້າຈະແຕ້ມຢູ່ຂ້າງນອກ ຫຼື ແຕ້ມໃສ່ພື້ນດິນ (ນຳໃຊ້ວັດຖຸຕາມທຳມະຊາດ ເຊັ່ນ: ກິ່ງໄມ້, ກ້ອນຫີນ, ໃບໄມ້ ແລະ ອື່ນໆ ເພື່ອສ້າງເປັນສັນຍາລັກ)
- **ສ້າງຄວາມເຂົ້າໃຈ**:
  - ຂໍ້ມູນທັງໝົດດັ່ງກ່າວນີ້ ຈະໄດ້ຖືກນຳໃຊ້ໃນການກອງປະຊຸມວາງແຜນພັດທະນາບ້ານ. ພວກເຮົາ ຢາກໃຫ້ບ້ານຂອງພວກເຮົາ ເປັນຄືແນວໃດ ໃນ 5 ປີ ຈາກນີ້ໄປ?
  - ການແຕ້ມແຜນວາດ ຈະເຮັດໃຫ້ ຄວາມຮູ້ຕ່າງໆຂອງຊຸມຊົນ ແລະ ຂໍ້ມູນຕ່າງໆ ໄດ້ຖືກນຳອອກມາໃຊ້.
  - ແຜ່ນວາດຈະສະແດງໃຫ້ພວກເຮົາເຫັນ ການເຂົ້າເຖິງ ແລະ ການນຳໃຊ້ ພື້ນຖານໂຄງລ່າງຂອງບ້ານພວກເຮົາ ເຊັ່ນ: ນ້ຳກິນນ້ຳໃຊ້, ສຸຂະພາບ ແລະ ໂພຊະນາການ, ການສຶກສາ, ຊີວິດການເປັນຢູ່ ....
  - ແຜນວາດ ຈະສະແດງໃຫ້ພວກເຮົາເຫັນ ວິໃສທັດ ໃນອະນາຄົດ ຂອງບ້ານພວກເຮົາ;
  - ຄູສອນ, ນັກຮຽນ, ຊາວໜຸ່ມ, ຜູ້ອື່ນໆທີ່ສາມາດອ່ານ ແລະ ຂຽນໜັງສືໄດ້ ສາມາດຊ່ວຍໃນການແຕ້ມແຜນວາດ ໃສ່ເຈັ້ງແຜ່ນໃຫ່ຍ;

- **ເລີ່ມແຕ້ມແຜນວາດ ໂດຍໃຫ້ປະຕິບັດດັ່ງຕໍ່ໄປນີ້**:
  - ແຕ້ມເສັ້ນຊາຍແດນຂອງຄຸ້ມ ຫຼື ຂອງບ້ານ
  - ແຕ້ມເສັ້ນທາງໃຫ່ຍຜ່ານຄຸ້ມ ຫຼື ບ້ານ, ແຕ້ມທາງຍ່າງຕ່າງໆ
  - ແຕ້ມຫ້ວຍນ້ຳ,

- ແຕ້ມເຮືອນແຕ່ລະຫລັງໃສ່. (ໃຊ້ເຈັ້ຽແຜ່ນນ້ອຍໆ ພັບເຄິ່ງກາງ ເພື່ອໃຊ້ໝາຍຫລັງຄາເຮືອ). ທ່ານສາມາດ ໃຊ້ເຈັ້ຽແຜ່ນນ້ອຍ-ໃຫຍ່, ໃຊ້ສີທີ່ແຕກຕ່າງກັນ ເພື່ອສະແດງສະຖານະພາບຂອງຄົວເຮືອນ ແລະ ຂຽນຊື່ຫົວໜ້າຄົວເຮືອນໃສ່. ເມື່ອວາງແຜ່ນເຈັ້ຽ ທີ່ໝາຍແຕ່ລະຄົວເຮືອນ ກໍໝາຍວ່າພວກເຮົາບໍ່ໄດ້ຍົກເວັ້ນຄົວເຮືອນໃດ. ບາງຄົນອາດເວົ້າວ່າ ໂອ! ເຈົ້າລືມ ແຕ້ມເຮືອນຂ້ອຍໃສ່ ຢູ່ບ່ອນນັ້ນ. ເຮືອນຂອງຂ້ອຍ ຢູ່ລະຫວ່າງ ສີຂຽວ ແລະ ສີແດງ ຫັ້ນ...ດັ່ງນີ້ເປັນຕົ້ນ)!
- ແຕ້ມບັນດາ ໂຄງການທີ່ໄດ້ກໍ່ສ້າງຂຶ້ນຢູ່ໃນບ້ານ ໃນໄລຍະຜ່ານມາ ໂດຍຖາມວ່າມີໂຄງການຫຍັງແດ່? ທີ່ຕັ້ງຂອງແຕ່ລະໂຄງການຢູ່ໃສ?, ມີຈັກຄອບຄົວໄດ້ຮັບຜົນປະໂຫຍດ?, ມີຈັກຄອບຄົວບໍ່ໄດ້ຮັບຜົນປະໂຫຍດ ຍ້ອນຫຍັງ? ສະພາບຂອງແຕ່ລະໂຄງການເປັນຄືແນວໃດ? ລະບົບການຄຸ້ມຄອງນຳໃຊ້ໂຄງການເດ່ ມີຄືແນວໃດ?
- ແຕ້ມເນື້ອທີ່ປູກຝັງ, ແຕ້ມເນື້ອທີ່ປ່າໄມ້ຂອງບ້ານ ບ່ອນອຸດົມສົມບູນ ແລະ ບ່ອນທີ່ແຫ້ງແລ້ງ ທັງນີ້ເພື່ອສະແດງໃຫ້ເຫັນສະຖານະພາບໃນປະຈຸບັນຂອງບ້ານພວກເຮົາ;

***<u>ຕົວຢ່າງລັກສະນະຂອງການແຕ້ມແຜນວາດ</u>*** :



***ຕົວຢ່າງລັກສະນະຂອງການແຕ້ມແຜນວາດ***



- ພາຍຫລັງທີ່ການແຕ້ມແຜນວາດ ສຳເລັດແລ້ວ ຜູ້ອຳນວຍຄວາມສະດວກ ສະຫລຸບຄືນເນື້ອໃນຢູ່ໃນແຜນວາດ ໂດຍຊີ້ໃຫ້ເຫັນ ສະຖານະພາບໃນປະຈຸບັນຂອງບ້ານ ໂດຍສະເພາະສິ່ງທີ່ມີແລ້ວຢ່າງອຸດົມສົມບູນ, ສິ່ງທີ່ຂາດເຂີນ, ສິ່ງທີ່ເປັນບັນຫາ, ສະພາບການແຈກຢາຍຂອງຄົວເຮືອນລະດັບຕ່າງໆ, ການແຈກຢາຍຜົນປະໂຫຍດຕ່າງໆຂອງບ້ານ...ເພື່ອໃຫ້ຊຸມຊົນມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ຈຳແນກໄດ້ວ່າ ອັນໃດທີ່ເຂົາເຈົ້າມີຄວາມສຸກທີ່ສຸດ ຢູ່ໃນບ້ານຂອງເຂົາເຈົ້າ? ແລະ ອັນໃດທີ່ເຂົາເຈົ້າຍັງມີຄວາມທຸກກວ່າໝູ່ ຢູ່ໃນບ້ານຂອງເຂົາເຈົ້າ? ທັງນີ້ເພື່ອເປັນຂໍ້ມູນໃຫ້ແກ່ການວິເຄາະບັນຫາ ແລະ ຈັດລຽງບຸລິມະສິດຂອງບ້ານ ເຊິ່ງເປັນຂັ້ນຕອນຕໍ່ໄປ.

### 1.4.5 ບາດກ້າວທີ່ 5: ວິເຄາະສະຖານະພາບ ແລະ ຈັດລຽງບຸລິມະສິດຂອງກຸ່ມ (ກຸ່ມຍິງ/ກຸ່ມຊາຍ)

- **ຈຸດປະສົງ**: ເພື່ອຊອກຮູ້ບັນຫາ, ສາເຫດ, ທ່າແຮງ ແລະ ວິທີການແກ້ໄຂບັນຫາ
- **ກຳນົດເວລາ**: ປະມານ 2-3 ຊົ່ວໂມງ
- **ວິທີການ:** ແຍກກຸ່ມຍິງ ແລະ ຊາຍ
- **ຂັ້ນຕອນ**:
  - ຂັ້ນຕອນທຳອິດ ສ້າງຄວາມເຂົ້າໃຈ ກ່ຽວກັບການວາງແຜນ ໂດຍສະແດງຮູບພາບທີ 33: ມົດເຮັດຮັງ ຢູ່ໃນຖົງເຄື່ອງມື ດັ່ງຕົວຢ່າງລຸ່ມນີ້:



- ຖາມຕໍ່ໄປວ່າ:

**ແມ່ນຫຍັງ ໂຕນ້ອຍໆ ຢູ່ໃນຮູບນີ້?.........**

ອັນນັ້ນແມ່ນມົດ. ເບິ່ງດ້ານໜ້ານີ້ ແລະ ຢູ່ເທິງໂພນ ເຈົ້າຈະເຫັນມົດ.

**ພວກມັນເຮັດຫຍັງຫັ້ນ?..........**

ມັນກຳລັງ ໄຕ່ຂຶ້ນເພື່ອເບິ່ງທິວທັດ ທຳມະຊາດ ຄືດັ່ງນັກທ່ອງທ່ຽວບໍ?

ມັນກຳລັງ ໄຕ່ຂຶ້ນໄປ ເພື່ອຄວາມເພີດເພີນບໍ?

**ບໍ່ ບໍ່ແມ່ນ** ! ມັນກຳລັງເຮັດວຽກໜັກ. ມັນກຳລັງ ທ້ອນໂຮມອາຫານ ແລະ ສະສົມໄວ້ຢູ່ໃນຮັງຂອງມັນ

**ເປັນຫຍັງມັນຈຶ່ງເຮັດແນວນັ້ນ?**

ມັນຮູ້ວ່າ ລະດູຝົນ ກຳລັງຈະມາເຖິງ. ພວກມັນຕ້ອງການສະສົມອາຫານ ໃຫ້ພຽງພໍ ສຳລັບໄລຍະລະດູຝົນ. ພວກມັນທ້ອນໂຮມ ແລະ ສະສົມອາຫານ ໄວ້ຫລາຍເທົ່າທີ່ຈະຫລາຍໄດ້ ຕາມຄວາມສາມາດຂອງມັນ.

ຖາມວ່າ: ສະໝອງຂອງມັນໃຫ່ຍຊ່ຳໃດ?..... ໃຫ່ຍທໍ່ກັບແກ່ນຜັກກາດ ແມ່ນບໍ?

ແຕ່ເບິ່ງແມ໋. ມັນສ້າງແຜນການ 1 ປີ.

**ຄັນຊັ້ນ ສະໝອງຂອງຄົນເຮົາ ໃຫ່ຍຊ່ຳໃດ?.... ໃຫ່ຍຊ່ຳໝາກພ້າວ ແມ່ນບໍ?**

ຖ້າທຽບໃສ່ ສະໝອງຂອງມົດ ສະໝອງຄົນເຮົາລື່ນຈັກເທື່ອ? ຄັນຊັ້ນ ພວກເຮົາ ຄວນມີແຜນ ໄວ້ຢ່າງໜ້ອຍ 5 ປີ ! ໄດ້ບໍ?...ເຫັນດີບໍ?....

- **ບັດນີ້ ພວກເຮົາສາມາດເລີ່ມແນະນໍາ ວິທີການວາງແຜນໄດ້.**
  - ພວກເຮົາຕ້ອງການວາງແຜນ ສໍາລັບພວກເຮົາເອງ ສໍາລັບຊຸມຊົນຂອງພວກເຮົາ.
  - ພວກເຮົາວາງແຜນ ເພື່ອສ້າງບ້ານຂອງພວກເຮົາ ກາຍເປັນບ່ອນທີ່ໜ້າຢູ່ອາໃສ ສໍາລັບພວກເຮົາເອງ ແລະ ສໍາລັບລູກຫລານໃນອະນາຄົດ?
  - ແນະນໍາໂດຍລວມ ຕາຕະລາງວິເຄາະຄວາມຕ້ອງການຂອງກຸ່ມຍິງ-ຊາຍ ໄປສູ່ ບຸລິມະສິດຄວາມຕ້ອງການຂອງບ້ານ

- **ວິເຄາະສະຖານະພາບຂອງບ້ານ ແລະ ຈັດລຽງບຸລິມະສິດ ຂອງແຕ່ລະກຸ່ມ:**
  - ພວກເຮົາ ສາມາດເລີ່ມຕົ້ນ ໂດຍຖາມພວກເຮົາເອງ ກ່ຽວກັບ 2 **ຄໍາຖາມດັ່ງນີ້**:

**ຄໍາຖາມທີ່ 1:** ອັນໃດ ທີ່ພວກເຮົາມີຄວາມສຸກ ກວ່າໝູ່ ຢູ່ບ້ານຂອງພວກເຮົາ?

**ໃຫ້ຂຽນລາຍການ ທີ່ຜູ້ເຂົ້າຮ່ວມຍົກມາ_ໃສ່ເຈ້ຍແຜ່ນໃຫຍ່ ເຊັ່ນຕົວຢ່າງ:**

- ຢູ່ບ້ານຂອງພວກເຮົາ ທຸກໆຄອບຄົວ ມີເຂົ້າກຸ້ມກິນ ຕະຫລອດປີ.
- ພວກເຮົາ ມີນໍ້າກິນນໍ້າໃຊ້ ພຽງພໍ ສໍາລັບທຸກໆຄົວເຮືອນ
- ພວກເຮົາ ມີຄວາມສຸກ ເພາະວ່າ ຢູ່ໃນບ້ານຂອງພວກເຮົາ ມີຄວາມສາມັກຄີ ມີການຊ່ວຍເຫລືອເຊິ່ງກັນ ແລະ ກັນ ແລະ ມີຫຍັງກໍປັນກັນຢູ່ສູ່ກັນກິນ
- ພວກເຮົາ ມີຄວາມສຸກ ເພາະວ່າການຈັດຕັ້ງບ້ານຂອງພວກເຮົາ ມີຄວາມເຂັ້ມແຂງ ແລະ ເຮັດວຽກງານຕ່າງໆຢ່າງມີສ່ວນຮ່ວມ
- ພວກເຮົາ ມີຄວາມສຸກ ເພາະວ່າບ້ານຂອງພວກເຮົາ ໃກ້ກັບປ່າໄມ້ທໍາມະຊາດ ຊຶ່ງພວກເຮົາສາມາດຊອກຫາອາຫານ, ເຄື່ອງປ່າຂອງດົງ ແລະ ຢາປົວພະຍາດ.

**ຄໍາຖາມທີ່ 2:** ອັນໃດທີ່ພວກເຮົາ ມີຄວາມທຸກ ກວ່າໝູ່ ຢູ່ບ້ານຂອງພວກເຮົາ ?

**ໃຫ້ຂຽນລາຍການ ທີ່ຜູ້ເຂົ້າຮ່ວມຍົກມາ_ໃສ່ເຈ້ຍແຜ່ນໃຫຍ່ ຄືດັ່ງຂ້າງເທິງ.**

**ຈາກນີ້ທ່ານສາມາດ ສ້າງແຜນທີ່ດີໄດ້.**

- **ນໍາໃຊ້ຕາຕະລາງ ວິເຄາະຄວາມຕ້ອງການຂອງກຸ່ມໄປສູ່ບຸລິມະສິດຂອງຄຸ້ມ/ບ້ານ. ລາຍລະອຽດເບິ່ງຕາຕະລາງ ຕໍ່ໄປນີ້:**

- **ຕາຕະລາງ ວິເຄາະຄວາມຕ້ອງການຂອງກຸ່ມໄປສູ່ບຸລິມະສິດຂອງຄຸ້ມ/ບ້ານ ລາຍລະອຽດເບິ່ງຕາຕະລາງຕໍ່ໄປນີ້:**

ຕາຕະລາງ ວິເຄາະຄວາມຕ້ອງການຂອງກຸ່ມຜູ້ຊາຍ ໄປສູ່ ບຸລິມະສິດຂອງບ້ານ

| ບັນຫາຂອງບ້ານ | ສາຍເຫດ ຍ້ອນຫັຍງ ? | ທ່າແຮງຂອງບ້ານ | ຂໍ້ສະເໜີເພື່ອແກ້ໄຂ (ກິດຈະກໍາ) |
|---|---|---|---|
| ດ້ານການສຶກສາ: | | | |
| | | | |
| | | | |
| ດ້ານຊີວິດການເປັນຢູ່: (ສຸຂະພາບຂອງແມ່ ແລະ ເດັກ, ອາຫານການກິນ, ໂພຊະນາການ, ນໍ້າກິນນໍ້າໃຊ້, ສຸຂະສຶກສາ... | | | |
| | | | |
| | | | |
| ດ້ານການກະສິ-ລ້ຽງສັດ: | | | |
| | | | |
| | | | |
| ດ້ານຄົມມະນາຄົມ ໄປມາຫາສູ່ກັນ: | | | |
| | | | |
| | | | |
| ດ້ານຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ: | | | |
| | | | |
| | | | |
| ອື່ນໆ....: | | | |
| | | | |

***ໝາຍເຫດ:***

- ✓ *ກະລຸນາເບິ່ງຫລາຍດ້ານ, ບໍ່ແມ່ນສະເພາະ ແຕ່ດ້ານພື້ນຖານໂຄງລ່າງ ຄວນກວາມເອົາກິດຈະກໍາສ້າງລາຍຮັບ ແລະ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ຊຸມຊົນຢູ່ໃນບ້ານຂອງຕົນ.*
- ✓ *ແຕ່ລະກຸ່ມ ສາມາດນໍາສະເໜີຄວາມຕ້ອງການ ບໍ່ໃຫ້ເກີນ 10 ບຸລິມະສິດ*

- **ຈັດລຽງບຸລິມະສິດຄວາມຕ້ອງການຂອງກຸ່ມຍ່ອຍ (ກຸ່ມຍິງ-ກຸ່ມຊາຍ).**
  - ❑ ຄັດເລືອກບຸລິມະສິດຂອງກຸ່ມ **ໂດຍໃຊ້ວິທີປ່ອນແກ່ນ** ດັ່ງຕໍ່ໄປນີ້:
    - ➢ ຢາຍກະຕ່າ (ມີຈັກກິດຈະກໍາ ກໍ່ໃຫ້ມີເທົ່ານັ້ນກະຕ່າ) ໃຫ້ກະຕ່າຕັ້ງຢູ່ຫ່າງກັນເລັກນ້ອຍ, ແຕ່ລະກະຕ່າຕ້ອງມີຝາປົກໄວ້ ແຕ່ຕ້ອງໄດ້ເຈາະຮູໄວ້ ສໍາລັບປ່ອນແກ່ນລົງ, ແຕ່ລະກະຕ່າຕ້ອງໃຊ້ຮູບພາບ ໂດຍອາດຈະສໍາເນົາມາຈາຫ້ອງການ ຫຼື ແຕ້ມຢູ່ກັບທີ່ ເພື່ອອະທິບາຍວ່າ ກະຕ່າດັ່ງກ່າວນັ້ນແມ່ນຫຍັງ ເຊັ່ນ: ໂຮງຮຽນ, ສຸກສາລາ, ທາງ, ຂົວ, ນໍ້າລິນ, ຊົນລະປະທານ, ຕາຄ່າຍໄຟຟ້າ, ຝຶກອົບຮົມສັດຕະວະແພດ, ຕູ້ຢາປະຈໍາບ້ານ, ໝໍຕໍາແຍ, ຈັດສັນທີ່ດິນ, ວິທີເກັບກູ້ເຄື່ອງປ່າຂອງດົງ...

- ຢາຍແກ່ນສາລີໃຫ້ແຕ່ລະຄົນ (ເທົ່າກັບເຄິ່ງໜຶ່ງຂອງຈຳນວນບຸລິມະສິດທີ່ມີ);
- ແນະນຳຈຸດປະສົງ ວິທີການຄັດເລືອກແບບນີ້ ອັນນີ້ແມ່ນການມອບສິດໃຫ້ທຸກຄົນໃນການຕັດສິນໃຈຄັດເລືອກເອົາຄວາມຕ້ອງການ, ແນະນຳວິທີການປ່ອນ ໂດຍໃຫ້ເຂົາເຈົ້າປ່ອນ 1 ແກ່ນລົງໃສ່ໃນກະຕ່າຍ ທີ່ເຂົາເຈົ້າຄິດວ່າຕ້ອງການ;
- ເມື່ອແກ່ນສາລີທັງໝົດຖືກຢາຍໃສ່ກະຕ່າຕາມຈຸດປະສົງຂອງຕົນແລ້ວ. ນັບຈຳນວນແກ່ນ ທີ່ຜູ້ເຂົ້າຮ່ວມ ໄດ້ປ່ອນລົງໃສ່ແຕ່ລະບຸລິສິດ (ໂດຍຊາວບ້ານມີສ່ວນຮ່ວມໃນການນັບ, ນັບໃຫ້ແຮງໆເພື່ອໃຫ້ທຸກຄົນ ໄດ້ຍິນນຳ)..ພ້ອມທັງຂຽນໃສ່ແຜ່ນໃຫ່ຍ;

**ອະທິບາຍເພີ້ມ**:

- ສາເຫດ ທີ່ມີຝາຕິດກະຕ່າໄວ້ນັ້ນ ກໍເພື່ອຫລີກລຽງບັນຫາທີ່ວ່າ ເຫັນໝູ່ປ່ອນໃສ່ກະຕ່າໃດຫລາຍ ແມ່ນຢາກປ່ອນນຳ?
- ການນຳໃຊ້ຮູບພາບ ໃສ່ແຕ່ລະກະຕ່າ ກໍເພື່ອສະແດງໃຫ້ຊາວບ້ານ ຜູ້ບໍ່ຮູ້ໜັງສືມີຄວາມເຂົ້າໃຈວ່າບຸລິມະສິດຄວາມຕ້ອງການ ແຕ່ລະອັນຢູ່ໃສ.

<u>**ເອົາໃຈໃສ່**</u>:

- ການຈັດຢາຍຄວາມຕ້ອງການຂອງກຸ່ມນັ້ນ ສະເໜີໃຫ້ຢາຍສະຫລັບກັນໄປ ໂດຍບໍ່ຄວນເອົາຄວາມຕ້ອງການອັນໃຫ່ຍໆ ວາງໄວ້ລຽນກ່ອນ ເພາະຖ້າເອົາວາງໄວ້ລຽນກັນ ຈະເຮັດໃຫ້ປະຊາຊົນປ່ອນເອົາແຕ່ຄວາມຕ້ອງການທີ່ຢູ່ໃກ້ຄຽງກັນ. ນອກຈາກນີ້ຍັງເປັນການກວດກາຄືນຄວາມເຂົ້າໃຈ ແລະ ຄວາມຕ້ອງການທີ່ແທ້ຈິງ ຂອງສະມາຊິກກຸ່ມນຳຕື່ມອີກດວ້ຍ;
- ເວລາດຳເນີນການປ່ອນແກ່ນສາລີ ຄວນໃຫ້ອຳນາດການປົກຄອງບ້ານປ່ອນຕາມຫລັງ ທັງນີ້ຖ້າຫາກປ່ອນກ່ອນ ອາດຈະເຮັດໃຫ້ລູກບ້ານປ່ອນເອົານຳ. ນອກຈາກນັ້ນ ສະເໜີໃຫ້ແມ່ຍິງເປັນຜູ້ປ່ອນກ່ອນໝູ່.
- ການປ່ອນແກ່ນສາລີ ເພື່ອຈັດລຽງບຸລິມະສິດຄວາມຕ້ອງການຂອງກຸ່ມນັ້ນ ຄວນເຮັດສອງເທື່ອ (ການປ່ອນເທື່ອທີ່ 1 ນັ້ນ ໃຫ້ຖືວ່າເປັນການທົດລອງ) ເພາະວ່າການປ່ອນເທື່ອທີ່ 1 ນັ້ນ ຊາວ ບ້ານຍັງບໍ່ທັນເຂົ້າໃຈ. ເຖິງແນວໃດກໍຕາມການປ່ອນເທື່ອທີ່ 1 ນັ້ນ ບໍ່ຄວນບອກໃຫ້ຊາວບ້ານຮູ້ວ່າແມ່ນເປັນການທົດລອງ ເພາະວ່າຈະເຮັດໃຫ້ເຂົາເຈົ້າບໍ່ມີຄວາມສົນໃຈ ຫຼື ບໍ່ມີບັນຍາກາດ.

## 1.5 ກອງປະຊຸມ ມື້ທີ່ 2: ຄັດເລືອກບຸລິມະສິດຄວາມຕ້ອງການຂອງຄຸ້ມ ຫຼື ບ້ານ

### 1.5.1 <u>ບາດກ້າວທີ່ 1</u>: ລົງທະບຽນຜູ້ເຂົ້າຮ່ວມ:

- ນັບຈຳນວນຄົນທີ່ມາເຂົ້າຮ່ວມ ເພື່ອຮັບຮອງວ່າຈຳນວນຜູ້ເຂົ້າຮ່ວມ ໄດ້ຕາມຈຳນວນທີ່ກຳນົດໄວ້;
- ນຳໃຊ້ແບບຟອມລົງທະບຽນ ແລະ ກວດກາຄວາມຖືກຕ້ອງຂອງການລົງທະບຽນ.

### 1.5.2 <u>ບາດກ້າວທີ່ 2</u>: ນຳສະເໜີຈຸດປະສົງ ແລະ ຄາດໝາຍທີ່ຈະໄດ້ຮັບ ຈາກກອງປະຊຸມມື້ນີ້:

### 1.5.3 <u>ບາດກ້າວທີ່ 3</u>: ຈັດລຽງບຸລິມະສິດຄວາມຕ້ອງການຂອງຄຸ້ມ/ບ້ານ.

- **ຈຸດປະສົງ**: ເພື່ອປຶກສາຫາລື, ຄັດຈ້ອນ ແລະ ຄັດເລືອກບຸລິມະສິດຂອງຄຸ້ມ/ບ້ານ
- **ກຳນົດເວລາ**: ປະມານ 2 ຊົ່ວໂມງ
- **ວິທີການ:** ທັງສອງກຸ່ມ (ກຸ່ມຍິງ ແລະ ຊາຍ) ມາປະຊຸມຮ່ວມກັນ:
- **ຂັ້ນຕອນ** :
  - ແຕ່ລະກຸ່ມນຳສະເໜີແຜນວາດຂອງຄຸ້ມ/ບ້ານ
  - ພາຍຫລັງແຕ່ລະກຸ່ມນຳສະເໜີແລ້ວ ສະເໜີໃຫ້ກຸ່ມອື່ນມີຄຳເຫັນ ວ່າຢູ່ໃນແຜນວາດນັ້ນ ຍັງຂາດຂາດອັນໃດແດ່?
  - ຄັດເລືອກແຜນວາດຈາກກຸ່ມໃດກຸ່ມນຶ່ງ ເພື່ອເປັນແຜນວາດຂອງບ້ານ ຈາກນັ້ນພ້ອມກັນປັບປຸງໃຫ້ສົມບູນດີຂື້ນ;
  - ແຕ່ລະກຸ່ມນຳສະເໜີບຸລິມະສິດຂອງກຸ່ມຂອງຕົນ. ການນຳສະເໜີບຸລິມະສິດ ຄວນອະທິ ບາຍໃຫ້ເຫັນບັນດາຈຸດສຳຄັນດັ່ງນີ້:
    - ສາຍເຫດທີ່ຕ້ອງການແມ່ນຫຍັງ? ຍ້ອນຫຍັງຈິ່ງມີຄວາມຕ້ອງການ?
    - ໃຜແດ່ຈະໄດ້ຮັບຜົນປະໂຫຍດ ? (ຊົນເຜົ່າ?, ຜູ້ຍິງ? ແລະ ຜູ້ດ້ອຍໂອກາດ?...)
    - ຜົນປະໂຫຍດທີ່ຈະໄດ້ຮັບແມ່ນຫຍັງແດ່?

  - ພາຍຫລັງຜູ້ຕາງໜ້າກຸ່ມ ນຳສະເໜີແລ້ວ ສະມາຊິກກຸ່ມຜູ້ອື່ນໆ ສາມາດຊ່ວຍອະທິບາຍເພີ່ມຕື່ມ ເພື່ອໃຫ້ຈະແຈ້ງຂຶ້ນ ຈາກນັ້ນເປີດກວ້າງການສົນທະນາ ໂດຍກຸ່ມອື່ນຕັ້ງຄຳຖາມ ໃນກໍລະນີມີຂໍ້ຂ້ອງໃຈ ຫຼື ຕ້ອງການອະທິບາຍໃຫ້ຄວາມຊັດເຈນຂຶ້ນຕື່ມ..ໂດຍສະເພາະເປັນຫຍັງກຸ່ມຂອງເຈົ້າຈຶ່ງຄັດເລືອກເອົາບຸລິມະສິດດັ່ງກ່າວນັ້ນ?....
  - ລວມເອົາບັນດາຄວາມຕ້ອງການທີ່ຄືກັນ ຂອງແຕ່ລະກຸ່ມ (ຍິງ ແລະ ຊາຍ) ມາເປັນ ຄວາມຕ້ອງການອັນດຽວ ເຊັ່ນ: ແຕ່ລະກຸ່ມຕ້ອງການສ້າງເສັ້ນທາງເຂົ້າບ້ານ (ເສັ້ນທາງດຽວກັນ), ແຕ່ລະຄຸ້ມຕ້ອງການສ້າງຂົວຂ້າມນ້ຳດຽວກັນ, ແຕ່ລະຄຸ້ມຕ້ອງການໂຮງຮຽນມັດທະຍົມຕົ້ນ, ແຕ່ລະຄຸ້ມຕ້ອງການກໍ່ສ້າງລະບົບນ້ຳລິນ....ດັ່ງນີ້ເປັນຕົ້ນ. ສະນັ້ນ: ຈະເຮັດໃຫ້ຈຳນວນບຸລິມະສິດຄວາມຕ້ອງການ ຫລຸດລົງ;
  - ໂຮມເອົາບຸລິມະສິດຄວາມຕ້ອງການ ຂອງກຸ່ມຍິງ ແລະ ກຸ່ມ ຊາຍ ແລະ ກຸ່ມອື່ນໆ ເຂົ້າກັນໃນກໍລະນີບຸລິມະສິດຄືກັນ ທັງນີ້ເພື່ອເປັນຄັດຈ້ອນບຸລິມະສິດຂອງທັງສອງກຸ່ມ ໃຫ້ນ້ອຍລົງ ແລະ ປຶກສາຫາລືເພື່ອໂຈະບຸລິມະສິດໃດໜຶ່ງ ທີ່ເຫັນວ່າມັນບໍ່ເປັນໄປບໍ່ໄດ້ ເພາະມັນເປັນໂຄງການໃຫ່ຍເກີນໄປ ມັນແມ່ນໜ້າວຽກມະຫາພາກເກີນໄປ ເຊັ່ນ: ການກໍ່ສ້າງສະໜາມບິນ, ທາງລົດໄຟ, ກໍສ້າງເຂື່ອນໄຟຟ້າ...ຫຼື ບາງບຸລິມະສິດແມ່ນບໍ່ສອດຄ່ອງ ກັບເງື່ອນໄຂຂອງຂະແ

ໜ່ວຍງານ ເຊັ່ນ: ການກໍ່ສ້າງສຸກສາລາ ທັງທີ່ມີສຸກສາລາຕັ້ງຢູ່ກຸ່ມບ້ານແລ້ວ ແລະ ໃຊ້ເວລາຍ່າງບໍ່ເກີນກວ່າ 2 ກິໂລແມັດ, ການກໍ່ສ້າງໂຮງຮຽນມັດທະຍົມຕົ້ນ ຢູ່ບ້ານນ້ອຍ ທັງໆທີ່ນັກຮຽນມີໜ້ອຍດັ່ງນີ້ເປັນຕົ້ນ...... ໝາຍຄວາມວ່າມາຮອດນີ້ພວກເຮົາໄດ້ລາຍການບຸລິມະສິດເຊິ່ງໄດ້ລວມກັນລະຫວ່າງກຸ່ມຍິງ ແລະ ກຸ່ມຊາຍ ທີ່ຜ່ານການຄັດຈ້ອນແລ້ວ....

- ລວມເອົາຄວາມຕ້ອງການອັນໃດເຂົ້າກັນໄດ້ ເຊັ່ນ: ທຶນຊື້ສັດລ້ຽງ, ທຶນຊື້ແນວພັນ, ຂໍທຶນຊື້ປາ....ຄວນຈະເປັນກອງທຶນພັດທະນາບ້ານ ແຕ່ໃຫ້ຂຽນໃສ່ໃນວົງເລັບຕື່ມວ່າ ສໍາລັບລ້ຽງປາ , ລ້ຽງງົວຄວາຍ......
- ຄັດຈ້ອນບາງຄວາມຕ້ອງການອອກຕັ້ງແຕ່ຕົ້ນ ຕົວຢ່າງ: ກະຊວງສາທາເພິ່ນມີເງື່ອນໄຂ ບໍ່ອະນຸຍາດຕັ້ງສຸກສາຢູ່ໃກ້ກັນ ຫຼື ໃຊ້ເວລາຍ່າງ ບໍ່ເກີນ 2 ຊົ່ວໂມງ.....ກະຊວງສຶກສາເດເພິ່ນມີເງື່ອນໄຂຫຍັງແດ່? ຈະຕ້ອງໄດ້ເບິ່ງ...ສະນັ້ນ ຖ້າຫາກບໍ່ຖືກຕາມເງື່ອນໄຂ ກໍຄວນໂຈະຄວາມຕ້ອງການດັ່ງກ່າວໄວ້ແຕ່ຫົວທີ, ຖ້າບໍ່ດັ່ງນັ້ນ ກໍຈະຖືກໂຈະຢູ່ກອງປະຊຸມຂັ້ນຖັດຂຶ້ນໄປ ...ສະນັ້ນ, ຜູ້ອໍານວຍຄວາມສະດວກໃນການວາງແຜນຕ້ອງກໍາໄດ້ບັນດາເງື່ອນໄຂ ຫຼື ນະໂຍບາຍໃນການຊ່ວຍເຫລືອ ຂອງແຕ່ລະຂະແໜງການທີ່ກ່ຽວຂ້ອງ;

- ຈັດລຽງບຸລິມະສິດຂອງຄຸ້ມ/ບ້ານ ຄວນປະຕິບັດດັ່ງນີ້:
  - 3 ໃນ 5 ບຸລິມະສິດທໍາອິດ ຕ້ອງມາຈາກ ຄວາມຕ້ອງການຂອງກຸ່ມຜູ້ຍິງ (ເປັນວິທີ ທີ່ເຄີຍນໍາໃຊ້ຫລາຍ ຢູ່ ທລຍ ຜ່ານມາ);

### 1.5.4 ບາດກ້າວທີ່ 4: ຄັດເລືອກເອົາຕົວແທນຂອງຄຸ້ມ/ຕົວແທນບ້ານ.

- **ຈຸດປະສົງ**: ເພື່ອຄັດເລືດເອົາຜູ້ຕາງໜ້າຄຸ້ມ/ບ້ານຂອງຕົນ ໄປປ້ອງກັນເອົາບຸລິມະສິດຂອງຕົນຢູ່ກອງປະຊຸມຂັ້ນຕໍ່ໄປ.
- **ກໍານົດເວລາ**: ປະມານ 1 ຊົ່ວໂມງ
- **ວິທີການ:** ທັງສອງກຸ່ມ ກຸ່ມຍິງ ແລະ ຊາຍ ມາປະຊຸມຮ່ວມກັນ
- **ຂັ້ນຕອນ** :
  - ນໍາສະເໜີ ໂຄງຮ່າງການຈັດຕັ້ງຂອງຄະນະພັດທະນາບ້ານຂອງພວກເຮົາ ກ່ອນທີ່ຈະມີການຄັດເລືອກ;
  - ຍົກຕົວຢ່າງ ຄວນຄັດເລືອກຜູ້ນໍາ ຜູ້ເປັນແນວໃດ? ໃຊ້ຈອກ 4 ຈອກ (ແຕ່ລະຈອກ ເອົານໍ້າໃສ່ປະມານເຄິ່ງຈອກ, ຈາກນັ້ນຈອກທີ່ 1 ເອົາຫີນໃສ່, ຈອກທີ່ 2 ເອົາດິນໃສ່, ຈອກທີ່ 3 ຕື່ມນໍ້າໃສ່ ແລະ ຈອກທີ່ 4 ເອົານໍ້າຕານປົນໃສ່.
  - ຕັ້ງຄໍາຖາມວ່າ ທ່ານຈະເລືອກເອົາຈອກໃດ? ຍ້ອນຫຍັງ?
  - ຜູ້ອໍານວຍຄວາມສະດວກ ອະທິບາຍເປັນການສະຫລຸບ:
    - **ຈອກທີ່ໃສ່ກ້ອນຫີນ** ຈະມີລັກສະນະແຂງກະດ້າງ, ບໍ່ສາມາດເຈືອປົນເຂົ້າກັບນໍ້າໄດ້. ຖ້າທຽບໃສ່ຜູ້ນໍາ ຈະແມ່ນນາຍ ແຂງກະດ້າງ ໃຊ້ລະບົບອາດຍາສິດ ແລະ ບໍ່ສາມາດຈະເປັນຜູ້ນໍາພາທີ່ດີໄດ້. ສະນັ້ນ ບໍ່ຄວນເລືອກເອົາຄົນໃນລັກສະນະແບບນີ້.

- **ຈອກທີ່ປິ່ນກັບດິນ** ກໍຈະເຮັດໃຫ້ນ້ຳຢູ່ໃນຈອກ ມີຄວາມເປິະເປື້ອນຂື້ນ, ຖ້າທຽບໃສ່ຄົນ ກໍແມ່ນຄົນບໍ່ດີ ບໍ່ມີຄຸນສົມບັດ ຖ້າເອົາຄົນລັກສະນະນີ້ເຂົ້າມາເປັນຫົວໜ້າ ກໍຈະເຮັດໃຫ້ລູກນ້ອງ ຫຼື ສະມາຊິກກຸ່ມ ຮຽນເອົາແບບຢ່າງທີ່ບໍ່ ດີ, ມີແຕ່ຄວາມຂັດແຍ້ງ. ສະນັ້ນ ບໍ່ຄວນເລືອກເອົາຄົນໃນລັກສະນະແບບນີ້.

- **ຈອກທີ່ເອົານ້ຳຕື່ມໃສ່ອີກ.** ໝາຍເຖິງຜູ້ມີຄວາມຮູ້ ຄວາມສາມາດຊ່ຳກັນ, ຖ້າເລືອກເອົາຄົນລັກສະນະນີ້ມາ ກໍ່ບໍ່ສາມາດເພີ້ມ ຫຼື ບໍ່ສາມາດເຮັດໃຫ້ກຸ່ມ ມີການພັດທະນາຫຍັງຂື້ນກຸ່ມ. ສະນັ້ນ ບໍ່ຄວນເລືອກເອົາຄົນໃນລັກສະນະແບບນີ້.

- **ຈອກທີ່ເອົານ້ຳຕານ** ຈະເຮັດໃຫ້ນ້ຳຢູ່ໃສ່ຈອກເພີ່ມຄວາມຫວານຂື້ນ ມີຄວາມເຂັ້ມຂຸ້ນຂື້ນ ສະນັ້ນຖ້າແມ່ນຫົວໜ້າ ຫຼື ຜູ້ນຳ ກໍຈະເຮັດໃຫ້ກຸ່ມມີຄວາມເຂັ້ມແຂງຂື້ນ ນຳເອົາຄຸນນະ ພາບມາສູ່ທີມ ເຮັດໃຫ້ອົງກອນໄດ້ຮັບການພັດທະນາ ຈາກນັ້ນສະມາຊິກ ກໍສາມາດຖອດຖອນເອົາບົດຮຽນນຳ ແລະ ຈະກາຍເປັນຜູ້ນຳໃນອະນາຄົດ ນີ້ແມ່ນຫົວໜ້າທີ່ ພວກເຮົາຕ້ອງການ ແລະ ແມ່ນຫົວໜ້າ ທີ່ພວກເຮົາຄວນຄັດເລືອກເອົາ.
- ນອກຈາກນີ້ ສາມາດເລົ່າເລື່ອງຕ່າງໆ ຢູ່ໃນປື້ມຄູ່ມືກະຈາຍຂໍ້ມູນ-ຂ່າວສານ ສຳລັບ ການພັດທະນາໂດຍຊຸມຊົນເປັນເຈົ້າການ ເຊັ່ນ: ການເປັນຜູ້ນຳ ຮູບທີ່ 13, 14, 15
- ຄັດເລືອກຫົວໜ້າໜ່ວຍ ແລະ ຮອງໜ່ວຍ 2 ຄົນ, ໃນນັ້ນຢ່າງໜ້ອຍຕ້ອງແມ່ນຜູ້ຍິງ 1 ຄົນ. ໂດຍນຳໃຊ້ວິທີປ່ອນແກ່ນ ໃນການຄັດເລືອກ ທັງນີ້ເພື່ອຄວາມໂປ່ງໃສ. ຫລີກລຽງວິທີການບົ່ງໂຕເອົາ.

### 1.6 ກອງປະຊຸມ ມື້ທີ່ 3: ສ້າງແຜນພັດທະນາບ້ານ _ ສະເພາະບ້ານໃດ ທີມີຫລາຍກວ່າ 1 ຄຸ້ມ.

- **ຈຸດປະສົງ**: ເພື່ອຈັດລຽງລະດັບຄວາມທຸກຍາກຂອງຄຸ້ມ ແລະ ຄັດເລືອກບຸລິມະສິດຂອງບ້ານ.
- **ກຳນົດເວລາ**: ປະມານ 3 ຊົ່ວໂມງ
- **ວິທີການ: ແຕ່ລະຄຸ້ມມາປະຊຸມຮ່ວມກັນ, ປະຊຸມຮ່ວມກັນ ລະຫວ່າງຍິງ ແລະ ຊາຍ**
  ສຳລັບຂັ້ນຕອນອື່ນໆ ນັ້ນແມ່ນຄືກັນກັບ ເວລາກັບມື້ທີ 2 ຢູ່ບ້ານທີ່ມີຄຸ້ມດຽວ. ມີຄວາມແຕກຕ່າງພຽງເລັກນ້ອຍ ລາຍລະອຽດແຕ່ລະກິດຈະກຳ ໄດ້ລະບຸໄວ້ຢູ່ໃນຕາຕະລາງ. ແຕ່ມີຄວາມແຕກຕ່າງຢູ່ບ່ອນວ່າ ກ່ອນຈະມີການຄັດເລືອບຸລິມະສິດຂອງບ້ານນັ້ນ ຕ້ອງໄດ້ຈັດລະດັບຄວາມທຸກຍາກຂອງບ້ານກ່ອນ ເພື່ອຊອກຮູ້ວ່າຄຸ້ມບ້ານໃດຈະໄດ້ການຊ່ວຍເຫລືອກ່ອນ.

<u>ຕາຕະລາງການຈັດອັນດັບຄວາມທຸກຍາກຂອງຄຸ້ມພາຍໃນບ້ານ</u>

| ຊື່ຄຸ້ມ/ບ້ານ | ການຈັດລະດັບຄວາມທຸກຍາກຂອງຄຸ້ມ/ຂອງບ້ານ | | | | | | ຄະແນນລວມ | ລະດັບຄວາມທຸກຍາກ |
|---|---|---|---|---|---|---|---|---|
| | ມີເຂົ້າກຸ້ມກິນ (ມີ = 1 ບໍ່ມີ = 0) | ໂຮງຮຽນ (ມີ = 1 ບໍ່ມີ = 0) | ສຸກສາລາ (ມີ = 1 ບໍ່ມີ = 0) | ນ້ຳສະອາດ (ມີ = 1 ບໍ່ມີ = 0) | ທີ່ນທາງທຽວໄດ້ 2 ລະດູ (ມີ = 1 ບໍ່ມີ = 0) | ມີໄຟຟ້າໃຊ້ (ມີ = 1 ບໍ່ມີ = 0) | | |
| 1. ກ | 1 | 1 | 0 | 1 | 1 | 0 | 4 | ປານກາງ |
| 2. ຂ | 0 | 1 | 1 | 0 | 0 | 0 | 2 | ທຸກ |
| 3. ຄ | 1 | 1 | 0 | 0 | 1 | 0 | 3 | ປານກາງ |
| 4. ງ | 1 | 1 | 1 | 1 | 1 | 0 | 5 | ບໍ່ທຸກ |
| 5. ຈ | 0 | 1 | 0 | 0 | 1 | 0 | 2 | ທຸກ |

*ໝາຍເຫດ: ຄະແນນ 0-2 = **ທຸກ** ຄະແນນ 3-4 = **ປານກາງ** ຄະແນນ 5-6 = **ບໍ່ທຸກ***

- *ໃນກໍລະນີເບື້ອງລັດ/ພັດທະນາຊົນນະບົດເມືອງ ມີຂໍ້ມູນລະດັບຄວາມທຸກຍາກຂອງແຕ່ລະຄຸ້ມແລ້ວ ແມ່ນໃຫ້ນຳໃຊ້ຂໍ້ມູນດັ່ງກ່າວເລີຍ ໂດຍບໍ່ຈຳເປັນຕ້ອງນຳໃຊ້ຕາຕະລາງດັ່ງກ່າວຂ້າງເທິງນີ້ອີກ.*
- *ໃນກໍລະນີ ທີ່ລະດັບຄວາມທຸກຍາກເທົ່າກັນ ດັ່ງຕົວຢ່າງຕາຕະລາງຂ້າງເທິງ ບ້ານ ຂ ແລະ ບ້ານ ຈ ສະນັ້ນ, ຕ້ອງໄດ້ເບິ່ງເງື່ອນໄຂອື່ນໆຕື່ມອີກ ເຊັ່ນ: ຄຸ້ມໃດຕັ້ງຢູ່ຫ່າງໄກກວ່າໝູ່ ?, ເບິ່ງວ່າຄຸ້ມໃດແມ່ນຊົນເຜົ່າ?, ເບິ່ງຈຳນວນຄອບຄົວທຸກຍາກຂອງຄຸ້ມໃດມີຈຳນວນຫລາຍກວ່າ? ດັ່ງນີ້ເປັນຕົ້ນ...*

1.6.1.1 <u>ບາດກ້າວທີ່ 6: ຈັດລຽງບຸລິມະສິດຂອງບ້ານ.</u>

- ແຕ່ລະຄຸ້ມສະເໜີ ບຸລິມະສິດຄວາມຕ້ອງການຂອງຕົນ,
- ຄັດຈ້ອນບຸລິມະສິດ:
  - ລວມເອົາບັນດາຄວາມຕ້ອງການທີ່ຄືກັນຂອງແຕ່ລະຄຸ້ມມາເປັນຄວາມຕ້ອງການອັນດຽວ ເຊັ່ນ: ແຕ່ລະຄຸ້ມຕ້ອງການສ້າງເສັ້ນທາງເຂົ້າບ້ານ (ເສັ້ນທາງດຽວກັນ), ແຕ່ລະຄຸ້ມຕ້ອງການສ້າງຂົວຂ້າມນ້ຳດຽວກັນ, ແຕ່ລະຄຸ້ມຕ້ອງການໂຮງຮຽນມັດທະຍົມຕົ້ນ, ແຕ່ລະຄຸ້ມຕ້ອງການກໍ່ສ້າງລະບົບນ້ຳລິນ....ດັ່ງນີ້ເປັນຕົ້ນ. ສະນັ້ນ: ຈະເຮັດໃຫ້ຈຳນວນບຸລິມະສິດຄວາມຕ້ອງການ ຫລຸດລົງ;
  - ລວມເອົາຄວາມຕ້ອງການອັນໃດເຂົ້າກັນໄດ້ ເຊັ່ນ: ທຶນຊື້ສັດລ້ຽງ, ທຶນຊື້ແນວພັນ, ຂໍທຶນຊື້ປາ ....ຄວນຈະເປັນກອງທຶນພັດທະນາບ້ານ ແຕ່ໃຫ້ຂຽນໃສ່ໃນວົງເລັບຕື່ມວ່າ ສຳລັບລ້ຽງປາ, ລ້ຽງງົວຄວາຍ......

- ຄັດຈ້ອນບາງຄວາມຕ້ອງການອອກຕັ້ງແຕ່ຕົ້ນ ຕົວຢ່າງ: ກະຊວງສາທາເພິ່ນມີເງື່ອນໄຂ ບໍ່ອະນຸຍາດຕັ້ງສຸກສາຢູ່ໃກ້ກັນ ຫຼື ໃຊ້ເວລາຍ່າງ ບໍ່ເກີນ 2 ຊົ່ວໂມງ.....ກະຊວງສຶກສາເດເພິ່ນມີເງື່ອນໄຂຫຍັງແດ່? ຈະຕ້ອງໄດ້ເບິ່ງ...ສະນັ້ນ ຖ້າຫາກບໍ່ຖືກຕາມເງື່ອນໄຂ ກໍຄວນໂຈະຄວາມຕ້ອງການດັ່ງກ່າວໄວ້ແຕ່ຫົວທີ, ຖ້າບໍ່ດັ່ງນັ້ນ ກໍຈະຖືກໂຈະຢູ່ກອງປະຊຸມຂັ້ນຖັດຂຶ້ນໄປ...ສະນັ້ນ, ຜູ້ອຳນວຍຄວາມສະດວກໃນການວາງແຜນຕ້ອງກຳໄດ້ບັນດາເງື່ອນໄຂ ຫຼື ນະໂຍບາຍໃນການຊ່ວຍເຫລືອ ຂອງແຕ່ລະຂະແໜງການທີ່ກ່ຽວຂ້ອງ;
- ການຈັດລຽງບຸລິມະສິດຂອງບ້ານ ສາມາດເລືອກເອົາບາງວິທີດັ່ງນີ້:

  **ທາງເລືອກທີ 1**: ເບິ່ງລະດັບຄວາມທຸກຍາກຂອງແຕ່ລະຄຸ້ມ ໝາຍຄວາມວ່າ: ໃຫ້ບຸລິມະ ສິດແກ່ຄຸ້ມບ້ານ ທີ່ມີຄວາມທຸກຍາກກວ່າໝູ່. (ເປັນວິທີ ທີ່ເຄີຍນຳໃຊ້ຫລາຍ ຢູ່ ຫລຍ ຜ່ານມາ);

  **ທາງເລືອກທີ 2**: ນຳໃຊ້ວິທີຈັດບຸລິມະສິດ ຕາມລະດັບຄວາມສຳຄັນຂອງກິດຈະກຳ ດັ່ງຕາຕະລາງຂ້າງລຸ່ມນີ້:

ຕາຕະລາງ ການຈັດລຽງບຸລິມະສິດ ໂດຍໃຊ້ວິທີຈັດຕາມເງື່ອນໄຂ ແລະ ລະດັບຄວາມສຳຄັນຂອງກິດຈະກຳ:

| | ຈຳນວນ ຜູ້ທີ່ຈະໄດ້ຮັບຜົນປະໂຫຍດ | ຜູ້ທຸກຍາກໄດ້ຮັບຜົນປະໂຫຍດ | ເປັນການລົງທຶນທີ່ກຸ້ມຄ່າ | ຊຸມຊົນຈັດຕັ້ງປະຕິບັດເອງ | ຄະແນນລວມ | ຈັດລຳດັບບຸລິມະສິດ |
|---|---|---|---|---|---|---|
| 1. ນ້ຳສະອາດ ແລະ ວຽກງານອະນາໄມສຸຂະສຶກສາ | 10 | 10 | 10 | 10 | 40 | 1 |
| 2. ກໍ່ສ້າງສຸກສາລາ | 10 | 8 | 10 | 10 | 38 | 2 |
| 3. ກໍ່ສ້າງຊົນລະປະທານ ຂະໜາດໜ້ອຍ | 7 | 8 | 10 | 5 | 30 | 5 |
| 4. ການສ້ອມແປງທາງເຂົ້າບ້ານ | 10 | 8 | 7 | 10 | 35 | 3 |
| 5. ຄູສອນໂຮງຮຽນປະຖົມ | 7 | 8 | 5 | 8 | 28 | 6 |
| 6. ກໍ່ສ້າງຫ້ອງນ້ຳ ຢູ່ໂຮງຮຽນປະຖົມຂອງບ້ານ | 8 | 10 | 10 | 7 | 35 | 4 |
| ໝາຍເຫດ: ການໃຫ້ຄະແນນ: ສູງສຸດ = 9-10 ປານກາງ = 6-8 ຕ່ຳ = ≥5 | | | | | | |

***ເອົາໃຈໃສ່:***

- *ບຸລິມະສິດທຳອິດຂອງຄຸ້ມ/ບ້ານທຸກຍາກກວ່າໝູ່ ຕ້ອງໄດ້ມາພິຈາລະນາກ່ອນໝູ່ ໝາຍຄວາມວ່າ ບຸລິມະສິດທຳອິດຕ້ອງມາຈາກຄຸ້ມ/ບ້ານທຸກຍາກ ຫຼື ຢ່າງໜ້ອຍບຸລິມະສິດຂອງບ້ານ/ກຸ່ມບ້ານນັ້ນ ຕ້ອງເຮັດໃຫ້ຄຸ້ມ/ບ້ານທີ່ທຸກຍາກກວ່າ ໄດ້ຮັບຜົນປະໂຫຍດໂດຍກົງ.*
- *ແຕ່ໃນນີ້ ກໍບໍ່ໝາຍຄວາມວ່າ ຈະເອົາໂຄງການຍ່ອຍໄປໃຫ້ຄຸ້ມ/ບ້ານທີ່ທຸກກວ່າໝູ່ເລີຍ ແຕ່ຕ້ອງໄດ້ເບິ່ງຫລາຍເງື່ອນໄຂຕື່ມອີກ ເຊັ່ນ: ເງື່ອນໄຂການສະໜັບສະໜູນ ຂອງຂະແໜງການທີ່ກ່ຽວຂ້ອງ?, ເປັນການລົງທຶນທີ່ກຸ້ມຄ່າ ຫຼື ບໍ?, ຕ້ອງຄຳນຶງເຖິງຜົນປະໂຫຍດຂອງຄຸ້ມ/ບ້ານອື່ນໆຢູ່ໃນບ້ານ/ກຸ່ມບ້ານນຳອີກ, ເບິ່ງທີ່ຕັ້ງຂອງໂຄງການຍ່ອຍ ຊຶ່ງບໍ່ຈຳເປັນວ່າຈະຕ້ອງຕັ້ງຢູ່ຄຸ້ມ/ບ້ານທີ່ທຸກຍາກນັ້ນເລີຍ , ແຕ່ອາດຈະຕ້ອງຕັ້ງຢູ່ຄຸ້ມ/ບ້ານອື່ນກໍໄດ້ ແຕ່ຕ້ອງຮັບປະກັນໃຫ້ຄຸ້ມ/ບ້ານທີ່ທຸກກວ່າໝູ່ນັ້ນ ສາມາດໄດ້ຮັບຜົນປະໂຫຍດໂດຍກົງ, ສະຫລຸບແລ້ວວ່າ ໃຫ້ບຸລິມະສິດແກ່ຄຸ້ມ/ບ້ານທຸກຍາກກວ່າໝູ່ ແຕ່ເບິ່ງເງື່ອນໄຂອື່ນ ແລະ ເບິ່ງຄຸ້ມ/ບ້ານອື່ນໆນຳອີກ.*

1.6.1.2 <u>ບາດກ້າວທີ່ 7: ສັງລວມບຸລິມະສິດຄວາມຕ້ອງການຂອງບ້ານ (ບຸລິມະສິດຂອງກຸ່ມຜູ້ຍິງ-ຊາຍ) ເຂົ້າໃນແບບຟອມ (**WMPRI_Form 12**) _ ເບິ່ງເອກະສານຄັດຕິດ.</u>

1.6.1.3 <u>ບາດກ້າວທີ່ 8: ທົບທວນຄືນ ຫຼື ຄັດເລືອກຕົວແທນບ້ານ 6 ຄົນ ເພື່ອເຂົ້າຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານ;</u>

1.6.1.4 <u>ບາດກ້າວທີ່ 9: ກຳນົດຄາດໝາຍສູ້ຊົນຂອງບ້ານ ໃນໄລຍະ 5 ປີຕໍ່ໜ້າ</u>

<u>ວິທີການ: ປຶກສາຫາລືເປັນກຸ່ມໃຫ່ຍ ດັ່ງຕາຕະລາງຕໍ່ໄປນີ້:</u>



ຄາດໝາຍສູ້ຊົນໃນການພັດທະນາຂອງບ້ານ:ສົບພວນ ໄລຍະ5 ປີ (2016-2020)

| ລ/ດ | ຄາດໝາຍສູ້ຊົນ | 2016 | 2020 |
|---|---|---|---|
| 1 | ຄອບຄົວທີ່ບໍ່ທຸກ | 0 | 30 |
| 2 | ຄົວເຮືອນປານກາງ | 38 | 27 |
| 3 | ຄົວເຮືອນທຸກ | 33 | 15 |
| 4 | ຄົວເຮືອນທຸກທີ່ສຸດ | 01 | 0 |
| 5 | ຄອບຄົວຜະລິດເຂົ້າເຫຼືອກິນ-ຂາຍໄດ້ | 0 | 10 |
| 6 | ຄົວເຮືອນລ້ຽງສັດຂາຍ-ສາມາດຂາຍໄດ້ | 36 | 50 |
| 7 | ຄົວເຮືອນປູກພືດຂາຍ-ສາມາດຂາຍໄດ້ | 41 | 60 |
| 8 | ຄົວເຮືອນປູກໝາກໄມ້ຂາຍ-ສາມາດຂາຍໄດ້ | 0 | 4 |
| 9 | ຄົວເຮືອນທີ່ສາມາດເຂົ້າເຖິງແຫຼ່ງນ້ຳກິນ-ໃຊ້ | 72 | 72. |
| 10 | ຄົວເຮືອນທີ່ມີວິດຖ່າຍຊຶມໃຊ້ | 72 | 72 |
| 11 | ຄົວເຮືອນທີ່ມີເດັກນ້ອຍເຂົ້າໂຮງຮຽນ | 72 | 72 |
| 12 | ຈ/ນເດັກນ້ອຍອອກໂຮງຮຽນກ່ອນຈົບ ມ.ຍ | 2 | 0 |
| 13 | ຈ/ນ ມີເດັກນ້ອຍຕ່ຳກວ່າ 5ປີ ເຕັ້ຍ (ທາງໂພຊະນາການ) | 19 | 5 |
| 14 | ຈ/ນ < 5 ປີ ນ້ຳໜັກ < ທາງໂພສະນາ | 19 | 5 |
| 15 | ຈ/ນ ທີ່ມີເກີດລູກໃນເຮືອນ | 3 | 0 |
| 16 | ຈ/ນ ທີ່ມີຜູ້ຍິງມີເລືອດຈາງ | 14 | 0 |
| 17 | ຈ/ນ ທີ່ມີຊາວໜຸ່ມວ່າງງານ | 9 | 3 |
| 18 | ຈ/ນ ທີ່ຂາດ [illegible] | 1 | 0 |

